# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສໍານັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ເມສາ 2025
ປີທີ 14
ສະບັບທີ 1012
ລາຍສັບປະດາ


## ປະທານສະພາແຫ່ງຊາດ ພົບປະຜູ້ມີສິດເລືອກຕັ້ງຢູ່ ມຊ



(ສພຊ) - ຕອນບ່າຍວັນພຸດທີ 26 ມີນານີ້ ທີ່ມະຫາວິທະຍາໄລແຫ່ງຊາດລາວ (ມຊ), ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ນຳໂດຍທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມ

ອ່ານຕໍ່ໜ້າ 4




ຢາກຂະຫຍາຍການກະສິກຳ-ປ່າໄມ້ຢ່າງຮອບດ້ານ ແລະ ກາຍເປັນພື້ນຖານໃຫ້ແກ່ອຸດສາຫະກຳຢ່າງໄວວານັ້ນ ຕ້ອງລະດົມກຳລັງແຮງສັງລວມຂອງເສດຖະກິດແຫ່ງຊາດ ສຸມໃສ່ການຂະຫຍາຍກະສິກຳ-ປ່າໄມ້. ຂະແໜງການຕ່າງໆ ຕ້ອງເອົາການຮັບໃຊ້ການກະສິກຳ-ປ່າໄມ້ ເປັນຈຸດໝາຍ ແລະ ເປັນທິດຕົ້ນຕໍໃນການເຄື່ອນໄຫວຂອງຕົນ ແລະອີງໃສ່ການຂະຫຍາຍຕົວຂອງກະສິກຳ-ປ່າໄມ້ ເພື່ອສ້າງຂະແໜງການຂອງຕົນ ໃຫ້ນັບມື້ເຕີບໃຫຍ່ຂະຫຍາຍຕົວຂຶ້ນ.

(ນິພົນເລືອກເຟັ້ນ ເຫຼັ້ມ III, ໜ້າ 24 ຂອງປະທານ ໄກສອນ ພົມວິຫານ)

ອ່ານຕໍ່ສະບັບໜ້າ

## 9 ຄຳເຫັນຂອງປະທານສະພາແຫ່ງຊາດ ເພື່ອເປັນທິດທາງພັດທະນາການສຶກສາ

(ສພຊ) - ໃນໂອກາດເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II ທີ່ມະຫາວິທະຍາໄລແຫ່ງຊາດລາວ ເມື່ອວັນທີ 26 ມີນາຜ່ານມາ, ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ມີບາງຄຳເຫັນເພື່ອເປັນທິດທາງໃນການເຄື່ອນໄຫວວຽກງານຂົງເຂດການສຶກສາ ດັ່ງນີ້:

1. ໃຫ້ຄະນະພັກ, ຄະນະນຳຂອງກະຊວງສຶກສາທິການ

ອ່ານຕໍ່ໜ້າ 7



## ປະກາດໃຊ້ລັດຖະທຳມະນູນ ສະບັບປັບປຸງປີ 2025 ໃນວັນທີ 22 ມີນາ



(ສພຊ) - ຕອນບ່າຍວັນທີ 27 ມີນານີ້, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຮອງປະທານຜູ້ປະຈຳການ ແລະ ຫົວໜ້າກອງເລຂາຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ (ຄລຊ) ໄດ້ຖະແຫຼງຂ່າວກ່ຽວກັບການພິຈາລະນາຮັບຮອງ ແລະ ປະກາດໃຊ້ລັດຖະທຳມະນູນສະບັບປີ 2025 ເຊິ່ງທ່ານໄດ້ກ່າວວ່າ: ຜ່ານການກະກຽມມາເປັນເວລາ 10 ເດືອນກວ່າ ນັບແຕ່ເດືອນພຶດສະພາ 2024 ເປັນຕົ້ນມາ, ໃນວັນທີ 17 ມີນາ 2025 ຄະນະກຳມະການລະດັບຊາດປັບປຸງລັດຖະ ທຳມະນູນ ໄດ້ນຳສະເໜີຮ່າງລັດຖະທຳມະນູນສະບັບປັບປຸງປີ 2025 ຕໍ່ກອງປະຊຸມ

ອ່ານຕໍ່ໜ້າ 11

## ຮຽບຮຽງເນື້ອໃນປະຫວັດ 50 ປີ ສະພາແຫ່ງຊາດ



(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນປະຫວັດ 50 ປີ ສະພາແຫ່ງຊາດ ໄດ້ຈັດຂຶ້ນໃນວັນທີ 26-28 ມີນາ 2025 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຫົວໜ້າຄະນະຮັບຜິດຊອບຄົ້ນຄວ້າ ແລະ ຮຽບຮຽງປະຫວັດຂອງສະພາແຫ່ງຊາດ, ມີທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ຮອງຫົວໜ້າຄະນະຮັບຜິດຊອບຄົ້ນຄວ້າແລະຮຽບຮຽງປະຫວັດຂອງສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານໃນຄະນະ ແລະ ກອງເລຂາຄະນະດັ່ງກ່າວເຂົ້າຮ່ວມຢ່າງພ້ອມພຽງ.

ອ່ານຕໍ່ໜ້າ 8

## ສຳມະນານະໂຍບາຍ ແລະ ການລົງທຶນເຂົ້າໃນວຽກງານປົກປ້ອງສັງຄົມ



ອ່ານຕໍ່ໜ້າ 8

## ສະຫຼຸບວຽກງານປ້ອງກັນພາຍໃນ ແລະ ການປ້ອງກັນຕົວ



(ສພຊ) - ວັນທີ 27 ມີນານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມສະຫຼຸບວຽກງານປ້ອງກັນພາຍໃນແລະການປ້ອງກັນຕົວຂອງສະພາແຫ່ງຊາດປະຈຳປີ 2024 ແລະທິດທາງແຜນການປີ 2025 ໂດຍການເປັນປະທານຂອງສະຫາຍ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ມີຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ (ປກສ) ພ້ອມດ້ວຍຄະນະ, ຕາງ

ອ່ານຕໍ່ໜ້າ 10


ກອງປະຊຸມຄັ້ງທີ I-XI ຂອງພັກ... (ໜ້າ 5)

ສົງຄາມການຄ້າ (ໜ້າ 8)



ສີລັງກາ... (ໜ້າ 10)

❖ ວິເສດ ສະແຫວງສຶກສາ
ກົດໝາຍປົກປ້ອງແມ່ຍິງ... (ໜ້າ 12)


**ຊົມເຊີຍວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບ ຄົບຮອບ 64 ປີ (5/4/1961 - 5/4/2025) ຢ່າງສຸດໃຈ!**

# ກບຜ ເຄື່ອນໄຫວວຽກງານຢູ່ແຂວງຫົວພັນ



(ສພຂ)-ວັນທີ25-26 ມີນາຜ່ານມາ, ທ່ານ ຄຳຈັນ ໂສຕາປະເສີດ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການບັນດາເຜົ່າ (ກບຜ) ພ້ອມດ້ວຍຄະນະ ໄດ້ເຮັດວຽກຮ່ວມກັບຄະນະປະຈຳສະພາປະຊາຊົນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານສະພາປະຊາຊົນແຂວງ, ວຽກງານສາສະໜາຈາກອົງການແນວລາວສ້າງຊາດແຂວງ, ພະແນກພາຍໃນແຂວງ, ປກສ ແຂວງ ແລະ ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານໂຄງການຈຸດສຸມຜາແດງ ຂອງລັດຖະບານ ລາວ-ຫວຽດນາມ ຈາກກອງກໍ່ສ້າງຮາກຖານທະຫານແຂວງຫົວພັນ.

ຈາກນັ້ນ, ທ່ານ ຄຳຈັນ ໂສຕາປະເສີດ ແລະ ທ່ານ ສີຄຳ ບຸນມີໄຊ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຮັດວຽກຮ່ວມກັບການນຳເມືອງກວັນ ແລະ ກອງປະຕິບັດງານ 208 ປະຈຳໂຄງການພັດທະນາກຸ່ມຜາແດງ ເຊິ່ງຮັບຟັງການລາຍງານຈັດຕັ້ງປະຕິບັດໂຄງການດັ່ງກ່າວກ່ຽວກັບຂໍ້ສະດວກແລະຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາເພື່ອເປັນຂໍ້ມູນນຳສະເໜີຕໍ່ລັດຖະບານ ລາວ-ຫວຽດນາມ; ໂອກາດນີ້, ຍັງໄດ້ໄປຢ້ຽມຢາມໂຄງການກໍ່ສ້າງໂຮງຮຽນ ມສ ຜາແດງ ແລະ ໂຮງງານຜະລິດເສັ້ນລ້ອນມັນສາຄູ ແລະ ແປ້ງມັນຕົ້ນ ຂອງບໍລິສັດ ໂກເອໂກ ສສ.ຫວຽດນາມ ທີ່ລົງທຶນໃຫ້ປະຊາຊົນ ຈຳນວນ 10 ບ້ານ ຂອງກຸ່ມຜາແດງ ປູກມັນສາຄູ ແລະ ມັນຕົ້ນ ເຂົ້າໃນໂຮງງານຜະລິດເປັນສິນຄ້າສຳເລັດຮູບອີກດ້ວຍ.

**(ນາງ ໄຜ່ ວົງວິໄລພອນ)**

# ສສຊ ແລະ ສສຂ ພົບປະຢ້ຽມຢາມປະຊາຊົນຫຼາຍບ້ານຂອງເມືອງປາກຊ່ອງ



(ສພຊ)-ວັນທີ24-26 ມີນານີ້, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 15 ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຈຳປາສັກ ນຳໂດຍທ່ານ ອຳໄພ ຈິດມານົນ ຮອງປະທານກຳມາທິການກົດໝາຍ ສົມທົບກັບທ່ານ ນາງ ບອນຄຳ ເວີ່ນໂພຄຳ ຫົວໜ້າຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງປາກຊ່ອງ ແລະ ຄະນະຕິດຕາມ ໄດ້ເຄື່ອນໄຫວຢູ່ຫຼາຍຈຸດຂອງເຂດເລືອກຕັ້ງເມືອງປາກຊ່ອງຄື: ບ້ານຈັນສະຫວ່າງ+ບ້ານຫຼັກ 12, ບ້ານຫຼັກ 33+ບ້ານຫຼັກ28, ບ້ານໜອງກາຍ+ບ້ານໜອງບອນ, ບ້ານນ້ຳຮຸ່ງ ແລະ ບ້ານນ້ຳໂກງ ເຊິ່ງໄດ້ພົບປະກັບອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນຜູ້ມີສິດເລືອກຕັ້ງ ໂດຍໄດ້ຮັບຟັງການລາຍງາຍຫຍໍ້ສະພາບຈຸດພິເສດ ແລະ ການຈັດຕັ້ງປະຕິບັດວຽກງານຈາກຕາງໜ້າອົງການປົກຄອງບ້ານໃນແຕ່ລະຈຸດ ພ້ອມທັງຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງອົງການປົກຄອງ ແລະ ພໍ່ແມ່ປະຊາຊົນຫຼາຍບັນຫາສຳຄັນທີ່ຕິດພັນກັບຊີວິດການເປັນຢູ່, ການພັດທະນາເສດ-ສັງຄົມທີ່ສົ່ງຜົນກະທົບ ແລະ ບັນຫາອື່ນໆ.

ໂອກາດນີ້, ບັນດາທ່ານສະມາຊິກສະພາ ໄດ້ຍົກໃຫ້ເຫັນບາງເນື້ອໃນສຳຄັນຂອງຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ຊຸດທີ II ທີ່ໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງຊາດ ແລະ ຂອງທ້ອງຖິ່ນ; ພ້ອມນັ້ນ, ໄດ້ຍົກໃຫ້ເຫັນແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍແລະນິຕິກຳໃຕ້ກົດໝາຍຂອງລັດເພື່ອໃຫ້ອົງການປົກຄອງ ແລະ ພໍ່ແມ່ປະຊາຊົນ ໄດ້ເຊື່ອມຊຶມ, ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ຕິດພັນກັບການອະທິບາຍຊີ້ແຈງຕໍ່ບາງ ຄຳສະເໜີທີ່ກອງເລຂາໄດ້ບັນທຶກເກັບກຳຢ່າງລະອຽດ ເພື່ອນຳໄປລາຍງານຕໍ່ຄະນະປະຈຳ ສພຊ ແລະ ສພຂ ຄົ້ນຄວ້າພິຈາລະນາ, ຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງຂັ້ນຕ່າງໆແກ້ໄຂ.

**(ສົມໝາຍ ແລະ ສົມວິຈິດ ໄຊມົນຕີ)**

# ຍົກສູງຂີດຄວາມສາມາດການປະຕິບັດໜ້າທີ່ວຽກງານການຕ່າງປະເທດ



(ສພຊ)-ວັນທີ27-28 ມີນາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ), ກຳມາທິການການຕ່າງປະເທດ ໄດ້ຈັດກອງປະຊຸມຝຶກອົບຮົມຍົກສູງຂີດຄວາມສາມາດໃນການປະຕິບັດໜ້າທີ່ວຽກງານໃຫ້ແກ່ພະນັກງານ-ລັດຖະກອນທີ່ເປັນເສນາທິການຮັບໃຊ້ໃຫ້ແກ່ວຽກງານການຕ່າງປະເທດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ສັນຍາ ປຣະເສີດ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການການຕ່າງປະເທດ; ມີຮອງປະທານກຳມາທິການການຕ່າງປະເທດ, ຫົວໜ້າ-ຮອງຫົວໜ້າກົມ, ຫົວໜ້າ-ຮອງຫົວໜ້າພະແນກ, ຕາງໜ້າຈາກກົມທີ່ກ່ຽວຂ້ອງພາຍໃນ ສພຊ ແລະ ສະພາປະຊາຊົນແຂວງ, ນະຄອນຫຼວງວຽງຈັນ(ເຂົ້າຮ່ວມທາງອອນລາຍ) ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງການຝຶກອົບຮົມໃນຄັ້ງນີ້ເພື່ອຍົກສູງຂີດຄວາມສາມາດໃນການປະຕິບັດໜ້າທີ່ວຽກງານໃຫ້ແກ່ພະນັກງານ-ລັດຖະກອນທີ່ເປັນເສນາທິການຮັບໃຊ້ໃຫ້ແກ່ວຽກງານການຕ່າງປະເທດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທັງເປັນການຍົກລະດັບຄວາມຮູ້ຄວາມເຂົ້າໃຈຕໍ່ກັບວຽກງານການຕ່າງປະເທດຂອງ ສພຊ ໂດຍສະເພາະແມ່ນການສ້າງຄວາມຮັບຮູ້ກ່ຽວກັບພາລະບົດບາດຂອງບັນດາພະແນກຕ່າງໆຂອງກົມເສນາທິການ ໃຫ້ມີຄວາມເລິກເຊິ່ງກວ່າເກົ່າ.

ກອງປະຊຸມໄດ້ຮັບຟັງການສະເໜີກ່ຽວກັບບາງບົດຮຽນໃນຂົງເຂດວຽກງານການຕ່າງປະເທດຈາກບັນດາຜູ້ຕາງໜ້າຂອງສອງກົມເສນາທິການ ໂດຍສະເພາະແມ່ນ: ການຍົກສູງທາງດ້ານເນື້ອໃນທີ່ຈະນຳເຂົ້າກອງປະຊຸມຄົບຄະນະປະຈຳປີຂອງກຳມາທິການການຕ່າງປະເທດ, ພາລະບົດບາດໃນການເປັນເສນາທິການໃຫ້ແກ່ກົມພົວພັນລັດຖະສະພາສອງຝ່າຍ, ການກະກຽມດ້ານຕ່າງໆ ໃຫ້ແກ່ຄະນະຜູ້ແທນສະພາແຫ່ງຊາດລາວ ໃນການເຂົ້າຮ່ວມກອງປະຊຸມອົງການລັດຖະສະພາພາກພື້ນແລະສາກົນ, ປຶກສາຫາລືຕໍ່ຮ່າງຄຳແນະນຳແລະການເຜີຍແຜ່ວຽກງານການຕ່າງປະເທດ; ຈາກນັ້ນ, ໄດ້ພ້ອມກັນເປັນເຈົ້າການໃນການຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ, ປຶກສາຫາລື, ຍົກໃຫ້ເຫັນດ້ານດີ ເພື່ອສືບຕໍ່ຜັນຂະຫຍາຍ ແລະ ດ້ານຄົງຄ້າງ ເພື່ອມີມາດຕະການແກ້ໄຂ, ມີການຖອດຖອນແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃນແຕ່ລະຫົວຂໍ້ທີ່ກ່າວມາຂ້າງເທິງ ເພື່ອເຮັດໃຫ້ການປະຕິບັດໜ້າທີ່ການເມືອງຂອງກຳມາທິການການຕ່າງປະເທດ ໄດ້ຮັບຜົນສຳເລັດຕາມພາລະບົດບາດຄວາມຮັບຜິດຊອບຢ່າງຈົບງາມ.

# 2 ພາກສ່ວນ ຢ້ຽມຊົມຫ້ອງມູນເຊື້ອສະພາແຫ່ງຊາດ



(ສພຊ) - ຕອນສວາຍວັນທີ 25 ມີນາ ແລະ 1 ເມສານີ້, ກົມສື່ມວນຊົນ ໄດ້ຕ້ອນຮັບ ແລະ ນຳພາ 3 ອົງການຈັດຕັ້ງມະຫາຊົນຈາກກະຊວງສຶກສາທິການ ແລະ ກິລາ (ສສກ) ຈຳນວນ 30 ສະຫາຍ ເຊິ່ງນຳໂດຍສະຫາຍ ແສງສະເດັນ ບຸບລາວົງ ປະທານສະຫະພັນກຳມະບານກະຊວງດັ່ງກ່າວ ແລະ ສະຫະພັນແມ່ຍິງອົງການກາແດງແຫ່ງຊາດລາວ (ກດລ) ຈຳນວນ 30 ສະຫາຍ ເຊິ່ງນຳໂດຍສະຫາຍ ນາງ ຈີລະພາ ແກ້ວຄຳຟຸຍ ປະທານສະຫະພັນແມ່ຍິງອົງການ ກດລ ຢ້ຽມຊົມຫ້ອງມູນເຊື້ອສະພາແຫ່ງຊາດ.

ການມາຢ້ຽມຊົມຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ, ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດ ຊຸດທີ I ເຖິງສະພາແຫ່ງຊາດຊຸດປັດຈຸບັນ (ຊຸດທີ IX) ເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມຮັບຮູ້ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະໜ້າທີ່ຂອງອົງການນິຕິບັນຍັດຫຼາຍຂຶ້ນ.

**(ສອນສັກ ວັນວິໄຊ ແລະ ນາງ ອາລິນ ສຸພົມມະປະດິດ)**



# ພົບປະແລກປ່ຽນບົດຮຽນລະຫວ່າງ ສພຂ ຫຼວງນ້ຳທາ ແລະ ສາລະວັນ



(ສພຂ) - ເພື່ອພົບປະແລກປ່ຽນບົດຮຽນ, ສ້າງຄວາມເຂັ້ມແຂງ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງ (ສພຂ) ໃນການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ກໍຄືການຈັດຕັ້ງຜັນຂະຫຍາຍເນື້ອໃນບົດບັນທຶກກອງປະຊຸມພົບປະແລກປ່ຽນລະຫວ່າງສະພາປະຊາຊົນແຂວງຫຼວງນ້ຳທາກັບສະພາປະຊາຊົນແຂວງສາລະວັນ ສະບັບລົງວັນທີ 1 ເມສາ 2024 ໃຫ້ເປັນຮູບປະທຳ ແລະ ມີບາດກ້າວໃໝ່ ທັງເປັນການຮັດແໜ້ນຄວາມສາມັກຄີ, ມິດຕະພາບ ແລະ ການຮ່ວມມືລະຫວ່າງສະພາປະຊາຊົນ 2 ແຂວງ ໃຫ້ແໜ້ນແຟ້ນຍິ່ງຂຶ້ນ.

ສະພາປະຊາຊົນແຂວງຫຼວງນ້ຳທາກັບສະພາປະຊາຊົນແຂວງສາລະວັນ ໄດ້ຈັດກອງປະຊຸມພົບປະແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃນຕອນເຊົ້າຂອງວັນທີ 21 ມີນາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຮ່ວມຂອງທ່ານ ຄຳຟອງ ອິນມານີ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 3, ປະທານ ສພຂ ຫຼວງນ້ຳທາ ແລະ ທ່ານ ສີເຣັງ ຫອມສົມບັດ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14, ປະທານ ສພຂ ສາລະວັນ; ມີບັນດາທ່ານກຳມະການຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 3 ແລະ 14, ຄະນະປະຈຳ, ຮອງປະທານຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການ, ຫົວໜ້າ ແລະ ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ລັດຖະກອນຂອງທັງສອງ ສພຂ ເຂົ້າຮ່ວມທັງໝົດ 62 ທ່ານ, ຍິງ 21 ທ່ານ.

ໃນພົບປະໄດ້ຮັບຟັງບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດບົດບັນທຶກກອງປະຊຸມຖອດຖອນບົດຮຽນລະຫວ່າງສະພາປະຊາຊົນແຂວງຫຼວງນ້ຳທາກັບສະພາປະຊາຊົນແຂວງສາລະວັນ ໃນໄລຍະຜ່ານມາ; ແລກປ່ຽນບົດຮຽນໃນຫົວຂໍ້ຕ່າງໆເປັນຕົ້ນ: ການຈັດຕັ້ງປະຕິບັດພາລະບົດບາດຂອງ ສພຂ ຄື: ດ້ານນິຕິກຳ, ການຕິດຕາມກວດກາແລະການຈັດຕັ້ງປະຕິບັດໜ້າທີ່ຂອງບັນດາຄະນະກຳມະການ, ຄະນະເລຂາທິການແລະບັນດາຂະແໜງຊ່ວຍວຽກ; ພ້ອມດຽວກັນ, ຍັງໄດ້ເຊັນບົດບັນທຶກຮ່ວມລະຫວ່າງສະພາປະຊາຊົນແຂວງຫຼວງນ້ຳທາ ກັບ ສະພາປະຊາຊົນແຂວງສາລະວັນ ໃນການແລກປ່ຽນບົດຮຽນຄັ້ງນີ້.

ພິເສດ, ໃນໂອກາດພົບປະແລກປ່ຽນບົດຮຽນຄັ້ງນີ້, ຄະນະຜູ້ແທນສະພາປະຊາຊົນ 2 ແຂວງ ໄດ້ເຂົ້າຮ່ວມສັງເກດການ ແລະ ຕິດຕາມວາລະສຸດທ້າຍການດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX; ຈາກນັ້ນ, ຍັງໄດ້ໄປທັດສະນະຢ້ຽມຊົມພາຍໃນຫໍສະພາແຫ່ງຊາດ ແລະ ຫໍພິພິທະພັນສິລະປະລາວ ອີກດ້ວຍ.

# ສສຊ, ສສຂ ເຄື່ອນໄຫວພົບປະຜູ້ມີເລືອກຕັ້ງຢູ່ເມືອງງາ



(ສພຂ) - ວັນທີ 7-9 ມີນາຜ່ານມາ, ທ່ານ ນາງ ຄຳພອນ ພົມມະຈັນ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 4, ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງງາ ທ່ານ ທອງຄານ ວັດສະດາກອນ ແລະທ່ານ ສົມສັກ ຈັນຄຳທະວົງ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II ຢູ່ 6 ບ້ານຂອງເມືອງງາ ຄື: ຫ້ວຍທຶງ, ຫາດຂາມ, ລາດແອ່ນ, ລາດກົມ, ລາດຂະມູນ ແລະ ໂພນສະຫວ່າງ ໂດຍມີການນຳເມືອງ, ອົງການປົກຄອງບ້ານ ແລະ ປະຊາຊົນເຂົ້າຮ່ວມຮັບຟັງທັງໝົດ 563 ຄົນ, ຍິງ 311 ຄົນ; ພ້ອມກັນນັ້ນ, ຍັງໄດ້ຮັບຟັງການມີຄຳຄິດເຫັນ ແລະ ຄຳສະເໜີຂອງຜູ້ເຂົ້າຮ່ວມ ເຊິ່ງ ສສຊ, ສສຂ ກໍໄດ້ຊີ້ແຈງຕໍ່ບາງຄຳສະເໜີ, ສ່ວນບາງຄຳສະເໜີ ຈະສົ່ງໃຫ້ພາກສ່ວນກ່ຽວຂ້ອງຄົ້ນຄວ້າ, ພິຈາລະນາ ແລະ ແກ້ໄຂຕາມລະບຽບການ.

# ສພຂ ໄຊຍະບູລີ ປະກາດຍົກຍ້າຍ, ແຕ່ງຕັ້ງພະນັກງານຫຼັກແຫຼ່ງ




(ສພຂ) - ວັນທີ 14 ກຸມພາຜ່ານມາທີ່ຫ້ອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ ໄດ້ມີພິທີປະກາດຍົກຍ້າຍ, ແຕ່ງຕັ້ງພະນັກງານຫຼັກແຫຼ່ງ ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ), ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການ, ກົມກອງອ້ອມຂ້າງແຂວງ ພ້ອມດ້ວຍບັນດາທ່ານຮອງປະທານຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມເປັນສັກຂີພະຍານ.

ໃນພິທີ, ທ່ານ ນາງ ວັນນາ ພົມວິສອນ ເລຂາທິການສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານມະຕິຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງວ່າດ້ວຍການຍົກຍ້າຍແຕ່ງຕັ້ງພະນັກງານຫຼັກແຫຼ່ງໄປຮັບໜ້າທີ່ໃໝ່; ຕາມມະຕິສະບັບເລກທີ 19, 20, 21, 22 ລົງວັນທີ 13 ກຸມພາ 2025 ເຊິ່ງຕົກລົງຍົກຍ້າຍທ່ານ ບຸນໄທ ສີເທບ ຄປຈສພຂ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໄປຮັບໜ້າທີ່ໃໝ່ເປັນປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊສ), ແຕ່ງຕັ້ງທ່ານ ເສັງວິໄລ ສິງ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ເປັນວ່າການປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ແຕ່ງຕັ້ງທ່ານ ຄຳປະດິດ ລິນທະວົງ ຫົວໜ້າຂະແໜງຄົ້ນຄວ້າ-ສັງລວມ ແລະ ຂໍ້ມູນຂ່າວສານເປັນຮອງເລຂາທິການສະພາປະຊາຊົນແຂວງ.

ວັນພະຫັດທີ 13 ມີນາ ໄດ້ມີພິທີມອບ-ຮັບໜ້າທີ່ລະຫວ່າງປະທານຄະນະກຳມະການຍຸຕິທຳ ແລະ ປກຊສ ຜູ້ເກົ່າ ກັບຜູ້ໃໝ່ ຄື: ທ່ານ ສົມມະນາ ປິ່ນທິບ ແລະ ທ່ານ ບຸນໄທ ສີເທບ ແລະ ລະຫວ່າງປະທານຄະນະກຳມະການວັດ ທະນະທຳ-ສັງຄົມ ແລະ ບັນດາເຜົ່າ ຜູ້ເກົ່າ ກັບ ຜູ້ໃໝ່ ຄື: ທ່ານ ບຸນໄທ ສີເທບ ແລະ ທ່ານ ເສັງວິໄລ ສິງ.

**(ໂພໄຊ ແກ້ວກັນຍາ)**

# ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິຮັບຮອງເງິນເກີນແຜນ



(ສພຂ) - ວັນທີ 11-13 ມີນາຜ່ານມາ, ທ່ານ ວຽງໄຊ ສີວິໄລ ຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 9, ຮອງປະທານສະພາປະຊາຊົນແຂວງຊຽງຂວາງ ແລະ ທ່ານ ວົງເພັດ ມັງທະພອນ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກເມືອງໜອງແຮດ ແລະ ຂະແໜງການທີ່ກ່ຽວຂ້ອງ ໄດ້ເຄື່ອນຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິຮັບຮອງເງິນເກີນແຜນ ປີ 2022 ແລະ 2023 ຂອງແຂວງ ເພື່ອນຳໃຊ້ເຂົ້າໃນວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ການເຕົ້າໂຮມບ້ານນ້ອຍເປັນບ້ານໃຫຍ່ ດ້ວຍການຍົກຍ້າຍຄຸ້ມປ່າເລົ່າມາຢູ່ບ້ານນາເຂດບໍ່ກໍ ແລະ ໂຄງການກໍ່ສ້າງນ້ຳລິນຮັບໃຊ້ດ່ານສາກົນນ້ຳກັ່ນ, ບ້ານດິນດຳ ແລະ ຄ້າຍທະຫານຊາຍແດນ221 ເມືອງໜອງແຮດ.

ໂອກາດນີ້ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດການດຳເນີນໂຄງການໃນໄລຍະຜ່ານມາ, ໜ້າວຽກປັດຈຸບັນແລະທິດທາງແຜນການໃນຕໍ່ໜ້າ ພ້ອມທັງສົນທະນາແລກປ່ຽນບາງບັນຫາທີ່ມີຄວາມສົນໃຈ ໂດຍສະເພາະບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງ ທີ່ຈະຕ້ອງສືບຕໍ່ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ໂຄງການດຳເນີນໄປດ້ວຍຄວາມຖືກຕ້ອງຕາມຂັ້ນຕອນ, ຕາມການອະນຸຍາດຂອງລັດຖະບານ ບົນພື້ນຖານລະບຽບກົດໝາຍ, ຮັກສາສິດຜົນປະໂຫຍດພາກລັດ, ໂຄງການ ແລະ ປະຊາຊົນ ໃຫ້ສົມເຫດສົມຜົນ.

ທ່ານ ວຽງໄຊ ສີວິໄລ ໄດ້ສະແດງຄວາມຊົມເຊີຍຕໍ່ໂຄງການ ທີ່ໄດ້ເອົາໃຈໃສ່ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ ແລະ ສິ່ງແວດລ້ອມ; ຄຽງຄູ່ກັນນີ້ ກໍສະເໜີໃຫ້ໂຄງການເອົາໃຈໃສ່ຕິດຕາມຊ່ວຍເຫຼືອພໍ່ແມ່ປະຊາຊົນເຂດພັດທະນາໂຄງການ ໂດຍສົ່ງເສີມດ້ານການຜະລິດກະສິກຳ, ພັດທະນາປັບປຸງພື້ນຖານໂຄງລ່າງ ທີ່ເປັນທ່າແຮງຂອງທ້ອງຖິ່ນ ແລະ ອາຊີບອື່ນໆເຮັດໃຫ້ປະຊາຊົນມີອາຊີບທີ່ໝັ້ນຄົງ, ມີລາຍໄດ້ ເພື່ອເຮັດໃຫ້ຊີວິດການເປັນຢູ່ໄດ້ຮັບການປັບປຸງດີຂຶ້ນກວ່າເກົ່າ.

**(ເຈັ້ງວື່ ຢົວະວ່າ)**

# ສພຂ ວຽງຈັນ ຕ້ອນຮັບຄະນະຜູ້ແທນແຂວງກີຍອງຊັງນຳໂດ




(ສພຂ) - ວັນທີ 6 ມີນາ ຜ່ານມາ ທີ່ຫ້ອງວ່າການແຂວງ, ທ່ານ ບຸນສອນ ເຜີດລາວັນ ປະທານສະພາປະຊາຊົນແຂວງພ້ອມດ້ວຍຄະນະ ໄດ້ຕ້ອນຮັບທ່ານ ປາກ ຊອງອຸ ຫົວໜ້າສະຫວັດດີການແຂວງກີຍອງຊັງນຳໂດ ສ.ເກົາຫຼີ ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມແຂວງວຽງຈັນ.

ໃນການພົບປະ, ທ່ານ ບຸນສອນ ເຜີດລາວັນ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະລາຍງານສະພາບລວມຂອງແຂວງໂດຍຫຍໍ້ ເປັນຕົ້ນບັນດາທ່າແຮງທີ່ສຳຄັນໃນການພັດທະນາແຂວງ; ພ້ອມກັນນັ້ນ, ຍັງໄດ້ສະແດງຄວາມຊົມເຊີຍຕໍ່ບັນດາໂຄງການທີ່ແຂວງກີຍອງຊັງນຳໂດ ໃຫ້ການຊ່ວຍເຫຼືອຢູ່ແຂວງວຽງຈັນໃນໄລຍະຜ່ານໂດຍສະເພາະວຽກງານດ້ານສາທາລະນະສຸກ ເຊັ່ນ: ການສ້າງສຸກສາລາ, ມອບລົດຂົນສົ່ງຄົນເຈັບ, ອຸປະກອນການແພດ.

ໃນການມາຢ້ຽມຢາມຄັ້ງນີ້, ຄະນະຜູ້ແທນຍັງໄດ້ໄປຢ້ຽມຢາມ ແລະ ມອບອຸປະກອນສື່ການຮຽນ-ການສອນ ໃຫ້ແກ່ໂຮງຮຽນສາທາລະນະສຸກແຂວງວຽງຈັນ ເຊິ່ງກ່າວມອບໂດຍທ່ານ ປາກ ຊອງອຸ ແລະ ກ່າວຮັບໂດຍທ່ານ ນາງ ເຂັມພອນ ມິ່ງບຸບຜາ ຜູ້ອຳນວຍການໂຮງຮຽນດັ່ງກ່າວ; ພ້ອມນັ້ນ, ຍັງໄດ້ພ້ອມກັນໄປຢ້ຽມຢາມໂຮງໝໍແຂວງຕື່ມອີກ.

**(ບຸລາຕີ ແສນທະວົງ)**

# ປະກາດແຕ່ງຕັ້ງປະທານອົງການກວດສອບປະຈຳພາກໃຕ້



(ສພຂ) - ຕອນເຊົ້າວັນທີ 12 ມີນາຜ່ານມາ ທີ່ຫ້ອງປະຊຸມຂອງອົງການກວດສອບປະຈຳພາກໃຕ້ ໄດ້ພິທີປະກາດການຈັດຕັ້ງ ໂດຍການເປັນປະທານຮ່ວມຂອງທ່ານ ວຽງທະວີສອນ ເທບພະຈັນ ກຳມະການສຳຮອງສູນກາງພັກ, ປະທານອົງການກວດສອບແຫ່ງລັດ ແລະ ທ່ານ ສາຍທອງ ໄຊຍະວົງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຈຳປາສັກ; ມີບັນດາພະແນກການອ້ອມຂ້າງແຂວງ ແລະ ພະນັກງານພາຍໃນອົງການກວດສອບປະຈຳພາກໃຕ້ເຂົ້າຮ່ວມ.

ໃນພິທີ, ໄດ້ຜ່ານຂໍ້ຕົກລົງຂອງປະທານອົງການກວດສອບແຫ່ງລັດ ວ່າດ້ວຍການອະນຸມັດໃຫ້ທ່ານ ໄພທູນ ສີພູມມາ ປະທານອົງການກວດສອບປະຈຳພາກໃຕ້ ອອກພັກການຮັບອຸດໜູນບຳນານ ແລະ ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 66/ຄປຈ, ລົງວັນທີ 4 ມີນາ 2025 ວ່າດ້ວຍການແຕ່ງຕັ້ງປະທານອົງການກວດສອບປະຈຳພາກໃຕ້ ໂດຍໄດ້ແຕ່ງຕັ້ງທ່ານ ປອ. ສົມສັກ ແສງສັກດາສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 15, ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ເປັນປະທານອົງການກວດສອບປະຈຳພາກໃຕ້ຜູ້ໃໝ່.

ຄະນະປະທານກອງປະຊຸມ ໄດ້ມີຄຳເຫັນເນັ້ນໜັກໃຫ້ສະມາຊິກພັກ ແລະ ພະນັກງານພາຍໃນອົງການກວດສອບປະຈຳພາກໃຕ້ ໂດຍສະເພາະຜູ້ໄດ້ຮັບການແຕ່ງຕັ້ງໃໝ່ ເອົາໃຈໃສ່ວຽກງານການສຶກສາອົບຮົມການເມືອງ-ແນວຄິດສະມາຊິກພັກ-ພະນັກງານ ໃຫ້ມີຄວາມໜັກແໜ້ນ, ມີຄວາມອຸ່ນອຽນທຸ່ນທ່ຽງ, ເຄົາລົບລະບຽບກົດໝາຍ ແລະ ລະບຽບການ, ປະຕິບັດຈັນຍາບັນນັກກວດສອບຢ່າງເຂັ້ມງວດ ແລະ ເອົາໃຈໃສ່ພັດທະນາວຽກງານວິຊາສະເພາະການກວດສອບ ທັນເປັນທັນສະໄໝເປັນມືອາຊີບ ໃຫ້ກ້າວເຂົ້າສູ່ມາດຕະຖານສາກົນ ແລະ ຮັກສາໄດ້ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ໝັ້ນຄົງຕະຫຼອດໄປ.

**(ອົງການກວດສອບປະຈຳພາກໃຕ້)**

# ສພຂ ເຊກອງ ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານ 6 ພະແນກການ



(ສພຂ) - ເພື່ອຕິດຕາມກວດກາຄືນ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂອງບັນດາພະແນກການທີ່ຕິດພັນກັບມະຕິກອງປະຊຸມສະໄໝສາມັນເທື່ອທີ8ຂອງສະພາປະຊາຊົນແຂວງ (ສພຂ) ເຊກອງ ຊຸດທີ II; ວັນທີ 7 ມີນາຜ່ານມາ ທີ່ຫ້ອງປະຊຸມສພຂ ໄດ້ມີກອງປະຊຸມຮ່ວມລະຫວ່າງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ແລະ ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ກັບບັນດາພະແນກການໃນຂົງເຂດເສດຖະກິດແລະວັດທະນະທຳ-ສັງຄົມ ໂດຍການເປັນປະທານຂອງທ່ານ ປອ. ແພງສີ ສີລາວີ ຮອງປະທານສະພາປະຊາຊົນແຂວງ.

ກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານທີ່ຕິດພັນກັບມະຕິກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂ ເຊກອງ ຊຸດທີ II ຈາກບັນດາຫົວໜ້າ-ຮອງຫົວໜ້າ6 ພະແນກການຂອງແຂວງ ຄື: ການເງິນ, ອຸດສາຫະກຳ ແລະ ການຄ້າ, ກະສິກຳ ແລະ ປ່າໄມ້, ເຕັກໂນໂລຊີ ແລະ ການສື່ສານ, ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ແລະ ການຕ່າງປະເທດ ໂດຍສະເພາະແຫຼ່ງຂຸດຄົ້ນລາຍຮັບ ໂດຍແຍກເປັນອັນລະອຽດແຫຼ່ງລາຍຮັບເກົ່າ ແລະ ໃໝ່ ໃຫ້ຊັດເຈນ; ການຄຸ້ມຄອງລາຄາສິນຄ້າ, ການສົ່ງອອກ-ນຳເຂົ້າສິນຄ້າ; ການແກ້ໄຂກ່ຽວກັບການຂາຍໄມ້ຫຼຸດລາຄາກາງ ແລະ ການຊຸກຍູ້ສົ່ງເສີມການປ່ອຍສິນເຊື່ອດອກເບ້ຍຕ່ຳ ໃຫ້ບັນດາຫົວໜ່ວຍທຸລະກິດພາຍໃນແຂວງ; ການຄຸ້ມຄອງການສ້າງຕັ້ງໂຮງງານປຸງແຕ່ງໄມ້ ແລະ ເຜົາຖ່ານໄມ້ຕິ້ວ ຕິດພັນກັບການອະນຸຍາດໂກຕາໄມ້ໃນໄລຍະຜ່ານມາກໍຄືປີ2025; ການຄຸ້ມຄອງສື່ສັງຄົມອອນລາຍ, ສັນຍານໂທລະສັບ ແລະ ໄຟຟ້າໃນທົ່ວແຂວງ; ສະພາບການຈັດຕັ້ງປະຕິບັດໂຄງການກໍ່ສ້າງ (ປະຕິສັງຂອນ) ຖານທີ່ໝັ້ນຂອງທ່ານ ຄຳໄຕ ສີພັນດອນ (ໄລຍະທີ 1, 2 ແລະ 3) ຢູ່ບ້ານດາກປຳ ເມືອງດາກຈຶງ; ການພົວພັນຮ່ວມມືກັບຕ່າງປະເທດ ໂດຍສະເພາະການແກ້ໄຂບັນຫາຊາຍແດນ, ສັນຍາການຮ່ວມມືໃນແຕ່ລະດ້ານ. ຈາກນັ້ນ, ກໍໄດ້ມີການສົນທະນາແລກປ່ຽນ, ປະກອບຄຳຄິດຄຳເຫັນຕາມຄຳຖາມເຈາະຈີ້ມຢ່າງກົງໄປກົງມາ, ແທດເໝາະກັບສະພາບຕົວຈິງ ເຫັນໄດ້ດ້ານດີທີ່ຕັ້ງໜ້າ, ດ້ານອ່ອນ ແລະ ບັນຫາຄົງຄ້າງທີ່ຈະຕ້ອງໄດ້ພ້ອມກັນສືບຕໍ່ຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ ໂດຍຮັບປະກັນຄວາມຖືກຕ້ອງຕາມລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ.

**(ນາງ ນາລີວັນ ແສງມະນີ)**





## ປະທານ...

(ຕໍ່ຈາກໜ້າ 1)

ດ້ວຍຄະນະ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີ II ໂດຍການຕ້ອນຮັບຂອງທ່ານ ຮສ. ປອ. ພຸດ ສິມມາລາວົງ ກຳມະການສູນກາງພັກ, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ (ສສກ), ເຂົ້າຮ່ວມມີບັນດາການນຳຂັ້ນສູງແລະພະນັກງານຫຼັກແຫຼ່ງຂອງກະຊວງ ສສກ, ມຊ, ສະຖາບັນການສຶກສາແລະສະມາຄົມການສຶກສາພາກເອກະຊົນ ຕະຫຼອດຮອດຄູ-ອາຈານ ແລະນັກສຶກສາຂອງມະຫາວິທະຍາໄລແຫ່ງຊາດລາວ.

ພາຍຫຼັງທ່ານ ຮສ. ປອ. ພຸດ ສິມມາລາວົງ ໄດ້ລາຍງານຫຍໍ້ສະພາບລວມຂອງວຽກງານສຶກສາ, ວິທະຍາສາດແລະກິລາ; ບັນດາທ່ານ ສສຊ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ສປນວ ຊຸດທີ II ແນໃສ່ເຮັດໃຫ້ຜູ້ມີສິດເລືອກຕັ້ງ ໄດ້ເຊື່ອມຊຶມ, ຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງຂວາງກ່ຽວກັບຜົນສຳເລັດຂອງສອງກອງປະຊຸມດັ່ງກ່າວ. ຈາກນັ້ນ, ໄດ້ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຕໍ່ກັບບັນດາບັນຫາພົ້ນເດັ່ນທີ່ຈະເປັນຂໍ້ມູນນຳໄປຄົ້ນຄວ້າພິຈາລະນາ, ປະກອບຄຳຄິດຄຳເຫັນໃນການພິຈາລະນາບັນຫາສຳຄັນຕ່າງໆຢູ່ກອງປະຊຸມສະໄໝສາມັນຄັ້ງຕໍ່ໄປ ພ້ອມທັງນຳສະເໜີ ແລະ ຊຸກຍູ້ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂຕາມພາລະບົດບາດ; ເຊິ່ງບັນຫາທີ່ຜູ້ມີສິດເລືອກຕັ້ງໃຫ້ຄວາມສົນໃຈແມ່ນການຈັດຕັ້ງປະຕິບັດວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ໂດຍສະເພາະຊ່ວຍປຸກລະດົມຂົນຂວາຍປະຊາຊົນທີ່ມີລູກຫຼານໃນເກນເຂົ້າຮຽນ ໃຫ້ໄດ້ເຂົ້າຮຽນຢ່າງທົ່ວເຖິງ ແລະ ຮຽນໃຫ້ຈົບການສຶກສາພາກບັງຄັບ, ການຈັດສັນງົບປະມານໃຫ້ຂະແໜງການສຶກສາ, ພິຈາລະນາເພີ່ມເງິນອຸດໜູນວິຊາຊີບຄູເພື່ອກະຕຸ້ນວຽກງານການສຶກສາໃຫ້ມີຄຸນນະພາບ ແລະ ຮັບປະກັນຊີວິດການເປັນຢູ່ຂອງຄູ-ອາຈານດີຂຶ້ນເປັນກ້າວໆ.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ມີຄຳເຫັນວ່າ: ປີຜ່ານມາ ເຖິງວ່າຂົງເຂດສຶກສາໄດ້ປະສົບກັບຄວາມຫຍຸ້ງຍາກຫຼາຍປະການກໍຕາມ ແຕ່ດ້ວຍຄວາມເອົາໃຈໃສ່ຂອງລັດຖະບານ, ການນຳພາຊີ້ນຳຢ່າງໃກ້ຊິດຂອງຄະນະພັກ, ຄະນະນຳຂອງກະຊວງສຶກສາທິການ ແລະ ກິລາ ແລະ ຂອງມະຫາວິທະຍາໄລແຫ່ງຊາດລາວ, ຄວາມຮັບຜິດຊອບສູງແລະເປັນເຈົ້າການຂອງບັນດາໂຮງຮຽນຕ່າງໆໃນທົ່ວປະເທດ, ບັນດາພະນັກງານ-ລັດຖະກອນໃນຂົງເຂດການສຶກສາ ໄດ້ສຸມທຸກເຫື່ອແຮງ ແລະ ສະຕິປັນຍາ ເຂົ້າໃນການປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ເຮັດໃຫ້ບັນຫາຄວາມຫຍຸ້ງຍາກຕ່າງໆ ໄດ້ຮັບການປັບປຸງແກ້ໄຂນັບມື້ດີຂຶ້ນເປັນກ້າວໆ ເປັນຕົ້ນການແກ້ໄຂບັນຫາການຂາດຄູສອນ, ການປະລະການຮຽນຂອງນັກຮຽນ-ນັກສຶກສາ ແລະ ບັນຫາອື່ນໆ ຕາມນະໂຍບາຍ ແລະ ມາດຕະການທີ່ລັດຖະບານໄດ້ກຳນົດໃນມະຕິ 09/ລບ ໃຫ້ດີຂຶ້ນ; ຄຽງຄູ່ກັນນັ້ນ, ລັດຖະບານ ກຳລັງພິຈາລະນານະໂຍບາຍການເພີ່ມເງິນເບ້ຍລ້ຽງແກ່ນັກສຶກສາທີ່ຮຽນສາຍຄູໃຫ້ສູງຂຶ້ນ, ການກຳນົດໂກຕາຄູສອນໃຫ້ສອດຄ່ອງກັບແຜນກໍ່ສ້າງຄູແລະການທົດແທນຄູທີ່ສູນເສຍດ້ວຍຮູບການຕ່າງໆໃນແຕ່ລະປີ, ບັນດາຄາດໝາຍດ້ານການສຶກສາມີທັງໝົດ 16 ຕົວຊີ້ວັດເຊິ່ງໃນນີ້ຕົວຊີ້ວັດສ່ວນໃຫຍ່ ແມ່ນສາມາດບັນລຸໄດ້ຕາມແຜນການ.

# ກອງປະຊຸມຄັ້ງທີ I-XI ຂອງພັກປະຊາຊົນປະຕິວັດລາວ

## ຕໍ່ຈາກສະບັບກ່ອນ

1. ຕ້ອງບຸກທະລຸ ໃຫ້ໄດ້ທາງດ້ານຈິນຕະນາການດ້ວຍການປົດປ່ອຍ, ແກ້ໄຂທັດສະນະແນວຄິດແບບຄຳພີ, ຮັກສາເດີມ, ຂີ້ຄ້ານ ມັກງ່າຍ, ຊ້າຍຈັດຂວາໂພດ;

2. ຕ້ອງບຸກທະລຸ ຢ່າງແຂງແຮງດ້ານການພັດທະນາຊັບພະຍາກອນມະນຸດ, ໂດຍສະເພາະດ້ານການກໍ່ສ້າງ ແລະ ບຳລຸງຍົກລະດັບຄວາມຮູ້ຄວາມສາມາດ ໃນດ້ານຕ່າງໆ ຂອງພະນັກງານໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາ;

3. ຕ້ອງບຸກທະລຸ ໃນດ້ານການແກ້ໄຂລະບອບລະບຽບການບໍລິຫານ-ຄຸ້ມຄອງ ທີ່ຍັງກີດຫນ່ວງອັດຕັນການຂະຫຍາຍຕົວ ຂອງການຜະລິດທຸລະກິດ ແລະການບໍລິການໃຫ້ຕົກໄປຢ່າງຂາດຕົວ.

4. ຕ້ອງບຸກທະລຸ ໃນດ້ານການແກ້ໄຂຄວາມທຸກຍາກ ຂອງປະຊາຊົນດ້ວຍການຂຸດຄົ້ນແຫລ່ງທຶນຕ່າງໆ ແລະ ດ້ວຍນະໂຍບາຍສົ່ງເສີມເປັນພິເສດ, ສ້າງພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມ ຢ່າງມີຈຸດສຸມເພື່ອເປັນກຳລັງ ແຮງຊຸກດັນໃຫ້ການພັດທະນາໃນຂົງເຂດອື່ນໆ ຢ່າງແຂງແຮງ. ກອງປະຊຸມໃຫຍ່ເລັ່ງທວງໃຫ້ນຳເອົາຫນ້າທີ່ລວມແຫ່ງການບຸກທະລຸທັງ 04 ດ້ານນັ້ນ ເຂົ້າສູ່ພາກປະຕິບັດໂດຍໄວ ແລະ ໃຫ້ດຳເນີນໄປພ້ອມໆກັນຢ່າງກົມກຽວ ໂດຍມອບໃຫ້ຄະນະບໍລິຫານງານສູນກາງພັກ ແລະ ຄະນະພັກທຸກຂັ້ນນຳພາຊີ້ນຳປະຕິບັດ ຢ່າງເປັນເອກະພາບ ແລະ ແທດເຖິງຕົວຈິງ.

(6). ກອງປະຊຸມໃຫຍ່ ໄດ້ເປັນເອກະສັນຮັບຮອງເອົາບັນດາຫນ້າທີ່ ແລະ ທິດທາງວຽກງານຈຸດສຸມຈຳນວນຫນຶ່ງ ໃນ 05 ປີຕໍ່ຫນ້າ 2011-2015 ດັ່ງນີ້:

1. ດ້ານເສດຖະກິດ ແມ່ນຍຶດຫມັ້ນ ແລະສືບຕໍ່ປະຕິບັດວຽກງານຈຸດສຸມຕົ້ນຕໍຈຳນວນຫນຶ່ງດັ່ງນີ້:

- ຍຶດຫມັ້ນຖືເອົາການພັດທະນາເສດຖະກິດເປັນໃຈກາງ, ເສີມຂະຫຍາຍກຳລັງແຮງຂອງທຸກພາກສ່ວນເສດຖະກິດ ແນໃສ່ຂະຫຍາຍກຳລັງການຜະລິດຢ່າງແຂງແຮງ, ຫັນປ່ຽນເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າ, ສ້າງເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມໃຫ້ສົມບູນຍິ່ງໆຂຶ້ນ.

- ເພີ່ມຄວາມສາມາດ ແລະ ປະສິດທິພາບຂອງການຄຸ້ມຄອງລັດຕໍ່ເສດຖະກິດ, ປັບປຸງລະບອບລະບຽບການ ແລະ ກົນໄກຄຸ້ມຄອງເສດຖະກິດໃຫ້ມີລັກສະນະສົ່ງເສີມອັນຕັ້ງຫນ້າ.

- ສຸມໃສ່ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ໃຫ້ໄດ້ໂດຍພື້ນຖານດ້ວຍນະໂຍບາຍ ແລະ ມາດຕະການສົ່ງເສີມເປັນພິເສດແນໃສ່ຊຸກຍູ້ການຜະລິດ ເປັນສິນຄ້າ ຢ່າງແຂງແຮງກວ່າເກົ່າ ແລະ ພັດທະນາຊົນນະບົດໃຫ້ມີການຫັນປ່ຽນຢ່າງເດັ່ນຊັດ, ສ້າງບ້ານພັດທະນາໃຫ້ໄດ້ຫລາຍຂຶ້ນ.

- ພັດທະນາກະສິກຳແບບປະສົມປະສານ, ຮັບປະກັນຄວາມຫມັ້ນຄົງດ້ານສະບຽງອາຫານ, ປົກປັກຮັກສາ ແລະ ຟື້ນຟູບູລະນະປ່າໄມ້ໃຫ້ມີເນື້ອທີ່ປົກຫຸ້ມ ຫລືພື້ນທີ່ສີຂຽວຫລາຍຂຶ້ນ.

- ປະຕິບັດຍຸດທະສາດ ຫັນເປັນອຸດສາຫະກຳ, ຫັນເປັນທັນສະໄຫມ, ຈັດສັນ ແລະ ນຳໃຊ້ແຫລ່ງຊັບພະຍາກອນ ໃຫ້ມີປະສິດທິພາບສູງ, ເພີ່ມຄວາມເອົາໃຈໃສ່ຕໍ່ການຮັກສາສິ່ງແວດລ້ອມ, ເຂົ້າຮ່ວມຢ່າງຕັ້ງຫນ້າໃນຂະບວນການຕໍ່ສູ້ ແກ້ໄຂສະພາວະໂລກຮ້ອນ; ເປັນເຈົ້າການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະສາກົນ.

2. ພັດທະນາຂົງເຂດວັດທະນະທຳ-ສັງຄົມ ໃຫ້ສົມຄູ່ກັບເສດຖະກິດ ເພື່ອຮັບປະກັນຄວາມກົມກຽວ ແລະ ຄວາມຍືນຍົງ; ໂດຍຍຶດຫມັ້ນ:

- ຖືເອົາການພັດທະນາລະບົບການສຶກສາແຫ່ງຊາດ ຫຼື ການສ້າງຄົນເປັນໃຈກາງ ແລະ ເປັນຫນ້າທີ່ຈຸດສຸມແຫ່ງການບຸກທະລຸ ແນໃສ່ສ້າງບຸກຄະລາກອນ ປະເພດຕ່າງໆ ເຊັ່ນ: ກຳມະກອນວິຊາຊີບ, ນາຍຊ່າງ, ວິຊາການ, ວິສາວະກອນ, ຜູ້ຄຸ້ມຄອງ-ບໍລິຫານ, ຜູ້ປະກອບການ, ຜູ້ຈັດການ. ໃຫ້ມີຄຸນນະພາບ ແລະ ມີຈຳນວນພຽງພໍ ສຳລັບຕອບສະຫນອງຄວາມຮຽກຮ້ອງຕ້ອງການ ຂອງຫນ້າທີ່ວຽກງານຢູ່ໃນອົງການພັກ-ລັດ ແລະໃນທົ່ວສັງຄົມ.

- ສ້າງຄົນລາວໃຫ້ມີຄວາມເຂັ້ມແຂງທາງຮ່າງກາຍ ແລະ ມີພະລານາໄມສົມບູນດ້ວຍການປະຕິບັດນະໂຍບາຍສາທາລະນະສຸກຕາມທິດຖືເອົາການກັນພະຍາດ ສົ່ງເສີມສຸຂະພາບເປັນຕົ້ນຕໍ ແລະ ຖືເອົາການປິ່ນປົວທີ່ມີຄຸນນະພາບ ແລະ ສະຫນອງການບໍລິການດ້ານສາທາລະນະສຸກ ຢ່າງທົ່ວເຖິງເປັນສຳຄັນ, ປະຕິບັດລະບອບປິ່ນປົວບໍ່ເສຍຄ່າ ຕໍ່ເປົ້າຫມາຍທີ່ທຸກຍາກຂາດເຂີນ ແລະ ດ້ອຍໂອກາດ.

- ເພີ່ມພູນພູມປັນຍາ ຂອງຊາດຢ່າງແຂງແຮງ, ສ້າງຄົນລາວໃຫ້ມີຄວາມສີວິໄລທາງດ້ານຈິດໃຈ, ມີແນວຄິດ ແລະ ຄຸນສົມບັດສົມປະຕິວັດ, ມີຊີວະທັດແລະໂລກະທັດທີ່ກ້າວຫນ້າ, ສືບທອດເສີມຂະຫຍາຍ ວັດທະນະທຳແຫ່ງຊາດ, ທັງຮູ້ຮັບເອົາສິ່ງທີ່ມີຄຸນຄ່າຈາກວັດທະນະທຳ ຂອງນາໆຊາດ.

- ແກ້ໄຂບັນຫາທາງສັງຄົມ ທີ່ພົ້ນເດັ່ນ ດ້ວຍກຳລັງແຮງສັງລວມຂອງທົ່ວສັງຄົມແລະປະຕິບັດນະໂຍບາຍທາງສັງຄົມຕໍ່ເປົ້າຫມາຍຕ່າງໆຢ່າງເຫມາະສົມ.

3. ເສີມຂະຫຍາຍບົດບາດຂອງລະບົບອົງການອຳນາດແຫ່ງລັດໃຫ້ສູງຂຶ້ນຕື່ມ, ບູລະນະລັດປະຊາທິປະໄຕປະຊາຊົນ ໃຫ້ເປັນລັດແຫ່ງກົດຫມາຍ ຂອງປະຊາຊົນ ໂດຍປະຊາຊົນ ແລະເພື່ອປະຊາຊົນເທື່ອລະກ້າວ. ໃນສະເພາະຫນ້າທີ່ ຕ້ອງປະຕິບັດນຳ 'ສ້າງແຂວງ ເປັນຫົວຫນ່ວຍຍຸດທະສາດ, ສ້າງເມືອງ ເປັນຫົວຫນ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານ ເປັນຫົວຫນ່ວຍພັດທະນາໃຫ້ເປັນຈິງ.

4. ເພີ່ມທະວີວຽກງານແນວໂຮມ ຂອງພັກ; ເສີມຂະຫຍາຍບົດບາດ ຂອງອົງການແນວລາວສ້າງຊາດ, ຊາວຫນຸ່ມ, ແມ່ຍິງ, ກຳມະບານ ແລະ ສະຫະພັນນັກຮົບເກົ່າ ເພື່ອເພີ່ມທະວີຄວາມປອງດອງລະຫວ່າງເຜົ່າ, ຊັ້ນຄົນ, ເພດໄວ, ສາສະຫນາ ແລະ ສ້າງກ້ອນກຳລັງມະຫາສາມັກຄີທົ່ວປວງຊົນລາວ, ລວມທັງພີ່ນ້ອງ ເຊື້ອຊາດລາວຢູ່ຕ່າງປະເທດ; ສົ່ງເສີມບັນດາອົງການຈັດຕັ້ງສັງຄົມວິຊາຊີບ ແລະ ສະມາຄົມຕ່າງໆ ທີ່ໄດ້ສ້າງຕັ້ງ ແລະ ເຄື່ອນໄຫວຖືກຕ້ອງຕາມກົດຫມາຍ ເພື່ອເປັນກຳລັງແຮງສັງລວມໃນການສ້າງສາພັດທະນາປະເທດຊາດ.

5. ປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານໃຫ້ເລິກເຊິ່ງກວ້າງຂວາງ; ສົມທົບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກັບການພັດທະນາເສດຖະກິດ-ສັງຄົມແລະການພົວພັນຮ່ວມມືກັບຕ່າງປະເທດຢ່າງກົມກຽວ; ສືບຕໍ່ຫັນລົງກໍ່ສ້າງຮາກຖານການເມືອງ, ສ້າງບ້ານ ແລະ ກຸ່ມບ້ານພັດທະນາຕາມ 04 ເນື້ອໃນ 04 ຄາດຫມາຍ, ພັດທະນາເສດຖະກິດສັງຄົມ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ຕິດແຫນ້ນກັບການສ້າງທ່າສະຫນາມ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຢູ່ຮາກຖານ.

6. ສືບຕໍ່ເປີດກວ້າງການພົວພັນຕ່າງປະເທດ ແລະ ການຮ່ວມມືສາກົນ ໂດຍຍຶດຫມັ້ນແນວທາງການຕ່າງປະເທດສັນຕິພາບເອກະລາດ ມິດຕະພາບ ແລະ ການຮ່ວມມື ຢ່າງສະເຫມີຕົ້ນ ສະເຫມີປາຍ; ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດແບບຫລາຍທິດ, ຫລາຍຝ່າຍ, ຫລາຍລະດັບ ແລະ ຫລາຍຮູບແບບ ບົນພື້ນຖານຫຼັກການ ເຄົາລົບເຊິ່ງກັນ ແລະ ກັນ, ຕ່າງຝ່າຍຕ່າງມີຜົນປະໂຫຍດ.

7. ປັບປຸງກໍ່ສ້າງພັກ ໃຫ້ມີຄວາມປອດໃສ, ຫນັກແຫນ້ນ ແລະ ເຂັ້ມແຂງ; ມີຄວາມສາມາດນຳພາຢ່າງສົມຄູ່ກັບພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນເງື່ອນໄຂໃຫມ່; ໂດຍຍຶດຫມັ້ນ ໃນທິດທາງລວມກ່ຽວກັບການສ້າງພັກ ດັ່ງນີ້: ຍຶດຫມັ້ນໃນທາດແທ້ຂອງພັກມາກ-ເລນິນ, ອອກແຮງສ້າງແລະປັບປຸງຕົນເອງ ໃຫ້ທ່ຽມທັນກັບຍຸກສະໄຫມ, ເປັນພັກທີ່ມີຄວາມສາມາດກຳອຳນາດ ແລະ ກຳອຳນາດເພື່ອປະຊາຊົນ, ເພື່ອຄວາມຈະເລີນວັດທະນາ ຂອງປະເທດຊາດ; ເປັນພັກທີ່ມີການຈັດຕັ້ງເຂັ້ມແຂງ ແລະ ມີຄວາມສາມັກຄີເປັນເອກະພາບ ຫນັກແຫນ້ນທາງດ້ານມານະຈິດ ແລະ ການກະທຳ, ມີການຄຸ້ມຄອງທີ່ຮັດກຸມ, ມີລະບຽບວິໄນອັນເຂັ້ມງວດ, ມີແບບແຜນວິທີນຳພາທີ່ວິທະຍາສາດ, ປະດິດສ້າງ ແລະ ແທດເຫມາະຕົວຈິງ; ເປັນພັກທີ່ມີຄວາມປອດໃສຂາວສະອາດ ໂດຍມີຄວາມເດັດຂາດເຂັ້ມງວດ ໃນການສະກັດກັ້ນ, ກຳຈັດການສໍ້ລາດບັງຫລວງ ແລະ ປະກົດການຫຍໍ້ທໍ້ອື່ນໆ ຢູ່ໃນກົງຈັກຂອງພັກ, ຂອງລັດ ແລະ ໃນຖັນແຖວພະນັກງານ, ສະມາຊິກພັກ.

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ X ຂອງພັກໄດ້ດຳເນີນແຕ່ວັນທີ 18-22 ມັງກອນ 2016

ຢູ່ທີ່ນະຄອນຫລວງວຽງຈັນ ພາຍໃຕ້ຄຳຂວັນ "ຍົກສູງຄວາມສາມາດນຳພາ ແລະ ລັກສະນະນຳໜ້າຂອງພັກ, ເພີ່ມທະວີຄວາມສາມັກຄີທົ່ວປວງຊົນທັງຊາດ, ຍຶດໝັ້ນແນວທາງປ່ຽນແປງໃໝ່ຮອບດ້ານ ແລະ ຫຼັກການ, ປົກປັກຮັກສາ ແລະ ພັດທະນາປະເທດຊາດຕາມທິດຍືນຍົງສູ່ຈຸດໝາຍສັງຄົມນິຍົມຢ່າງໜັກແໜ້ນ" ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງນີ້ມີຜູ້ແທນສົມບູນ 685 ສະຫາຍ, ໃນນັ້ນມີຜູ້ແທນບົ່ງຕົວ 01 ສະຫາຍ. ບັນດາຜູ້ແທນກອງປະຊຸມໃຫຍ່ເປັນຕົວແທນໃຫ້ແກ່ສະມາຊິກພັກທັງໝົດໃນທົ່ວປະເທດ 252.879 ສະຫາຍ.

(1). ກອງປະຊຸມໃຫຍ່ໄດ້ຄົ້ນຄວ້າຕົກລົງບັນຫາສຳຄັນຂອງພັກ ແລະ ຂອງຊາດພາຍໃຕ້ບັນຍາກາດອັນສ້າງສັນ, ມີຄວາມຮັບຜິດຊອບ ທັງມີຄວາມສາມັກຄີ ເປັນເອກະພາບສູງ ແລະ ໄດ້ສິ້ນສຸດລົງດ້ວຍຜົນສຳເລັດອັນຈົບງາມ ເຊິ່ງສະແດງອອກດັ່ງນີ້:

1. ກອງປະຊຸມໃຫຍ່ໄດ້ຄົ້ນຄວ້າຢ່າງເລິກເຊິ່ງ ແລະ ໄດ້ຮັບຮອງເອົາຢ່າງເປັນເອກະພາບ ລາຍງານການເມືອງຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ IX ສະເໜີຕໍ່ກອງປະຊຸມໃຫຍ່ຄັ້ງທີ X ໂດຍໄດ້ສະແດງຄວາມເຫັນດີເຫັນພ້ອມນຳການສະຫລຸບຕີລາຄາຜົນແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ເປັນຕົ້ນບັນດາຜົນງານອັນພົ້ນເດັ່ນທີ່ຍາດມາໄດ້ໃນຂົງເຂດວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພັດທະນາເສດຖະກິດ-ສັງຄົມ, ການປັບປຸງບູລະນະລະບົບອຳນາດແຫ່ງລັດ, ວຽກງານແນວໂຮມ ແລະ ວຽກງານມະຫາຊົນຂອງພັກ, ວຽກງານການຕ່າງປະເທດ ແລະ ການເຊື່ອມໂຍງສາກົນ, ວຽກງານກໍ່ສ້າງພະນັກງານ, ບັນດາຜົນສຳເລັດທີ່ບັນລຸໄດ້ 05 ປີຜ່ານມາ, ໄດ້ສ້າງພື້ນຖານແລະທ່າວທ່າໃໝ່ໃຫ້ແກ່ການສືບຕໍ່ຂະຫຍາຍຕົວຂອງປະເທດຊາດພວກເຮົາໄປຕາມທິດທາງ ແລະ ຈຸດໝາຍທີ່ວາງໄວ້;

2. ກອງປະຊຸມໄດ້ປະກອບຄຳຄິດເຫັນຢ່າງກົງໄປກົງມາກ່ຽວກັບຂໍ້ຄົງຄ້າງໃນການນຳພາຊີ້ນຳຂອງພັກ ເຊິ່ງເປັນສາເຫດຕົ້ນຕໍອັນໜຶ່ງ ທີ່ພາໃຫ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານຈຸດສຸມໃນບາງດ້ານບໍ່ບັນລຸຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ແລະ ໄດ້ເລັ່ງທວງໃຫ້ມີມາດຕະການທີ່ແທດເໝາະ ເພື່ອດຳເນີນການແກ້ໄຂຂໍ້ຄົງຄ້າງທີ່ຜ່ານມາຢ່າງຈິງຈັງ ແນໃສ່ສ້າງການຫັນປ່ຽນອັນຕັ້ງໜ້າຫຼາຍຂຶ້ນໃນການຈັດຕັ້ງປະຕິບັດແນວທາງຂອງພັກຕໍ່ໄປ;

(2). ກອງປະຊຸມໃຫຍ່ໄດ້ຮັບຮອງເອົາຂໍ້ສະຫລຸບ07ປະການ ເຊິ່ງເປັນບົດຮຽນອັນປະເສີດທີ່ຖອດຖອນໄດ້ຈາກພຶດຕິກຳແຫ່ງການຈັດຕັ້ງນຳພາປະຕິບັດກອງປະຊຸມໃຫຍ່ ຄັ້ງທີ IX ແລະ 30 ປີ ແຫ່ງການປ່ຽນແປງໃໝ່. ພ້ອມກັນນັ້ນກໍໄດ້ກຳນົດ 07 ທິດທາງໜ້າທີ່ໃຫຍ່ສຳລັບໄລຍະຕໍ່ໜ້າ, ກອງປະຊຸມໃຫຍ່ ໄດ້ມອບໃຫ້ຄະນະບໍລິຫານງານສູນກາງພັກ ສະໄໝທີ X ຊີ້ນຳ, ຈັດຕັ້ງການຄົ້ນຄວ້າຮໍ່າຮຽນກອງປະຊຸມໃຫຍ່ຄັ້ງນີ້ ຢ່າງເປັນລະບົບເລິກເຊິ່ງ ໂດຍສະເພາະໃຫ້ພະນັກງານສະມາຊິກພັກຜູ້ທີ່ເປັນຫລັກແຫລ່ງຢູ່ໃນທຸກອົງການ, ຂະແໜງການ, ທຸກທ້ອງຖິ່ນ, ທຸກຂົງເຂດວຽກງານ ແລະ ທຸກຂັ້ນໃຫ້ເຂົ້າໃຈຢ່າງຖືກຕ້ອງເພື່ອສາມາດຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຢ່າງສອດຄ່ອງ ແລະ ນຳພາປະຕິບັດໃຫ້ເກີດໝາກຜົນຕົວຈິງທີ່ໃຫຍ່ຫລວງຂຶ້ນໄປເລື້ອຍໆ. ພ້ອມກັນນີ້ ກໍມອບໃຫ້ຄະນະບໍລິຫານງານສູນກາງພັກສືບຕໍ່ຄົ້ນຄວ້າຫັນທິດທາງໜ້າທີ່ຈຸດສຸມໃນບາງດ້ານເປັນມະຕິຂອງຄະນະບໍລິຫານງານສູນກາງພັກເພື່ອໃຫ້ຄະນະພັກຂັ້ນຕ່າງໆມີບ່ອນອີງອັນລະອຽດຈະແຈ້ງຕື່ມອີກສຳລັບການຈັດຕັ້ງປະຕິບັດ. ຂະນະດຽວກັນນັ້ນ ກໍຊີ້ນຳອົງການລັດໃຫ້ຫັນເປັນນິຕິກຳ, ເປັນແຜນງານ ແລະ ໂຄງການວຽກງານລະອຽດໃຫ້ໄວ ເພື່ອຍາດແຍ່ງເວລາຈັດຕັ້ງປະຕິບັດເລີ່ມແຕ່ຫົວທີ ແລະ ໃຫ້ໄດ້ຮັບຜົນສຳເລັດອັນສະຫງ່າງາມ.

(3). ກອງປະຊຸມໃຫຍ່ໄດ້ຟັງລາຍງານ ກ່ຽວກັບວິໄສທັດຮອດປີ 2030, ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໃນໄລຍະ 10 ປີ (2016-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 05 ປີຄັ້ງທີ VIII (2016-2020) ເຊິ່ງຄຳຂວັນວິໄສທັດ ແລະ ຍຸດທະສາດຂອງການພັດທະນາແມ່ນ "ສູ້ຊົນພັດທະນາປະເທດເຮົາໃຫ້ຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ໃນປີ 2020, ກ້າວໄປສູ່ປະເທດກຳລັງພັດທະນາ ມີລາຍຮັບປານກາງຕາມທິດການພັດທະນາສີຂຽວແລະຍືນຍົງເມື່ອເຖິງປີ2030". ກອງປະຊຸມໃຫຍ່ ໄດ້ສະແດງຄວາມຄິດເຫັນດີເຫັນພ້ອມກັບວິໄສທັດ, ຍຸດທະສາດ ແລະ ການພັດທະນາດັ່ງກ່າວ ໂດຍມອບໃຫ້ຄະນະບໍລິຫານງານສູນກາງພັກຊີ້ນຳລັດຖະບານໃຫ້ຕັ້ງໜ້າຜັນຂະຫຍາຍເປັນແຜນງານ, ໂຄງການລະດັບຊາດ ລວມທັງກຳນົດຂອບການລົງທຶນສຳລັບໂຄງການເຫລົ່ານັ້ນ ພ້ອມທັງປຸກລະດົມບັນດາພາກສ່ວນເສດຖະກິດ ແລະ ທົ່ວປວງຊົນເຂົ້າສູ່ການຈັດຕັ້ງປະຕິບັດໃຫ້ເປັນຈິງ.

(4). ກອງປະຊຸມໃຫຍ່ໄດ້ຮັບຮອງເອົາບົດສຳຫລວດການ

ອ່ານຕໍ່ໜ້າ 6

## ກອງປະຊຸມຄັ້ງທີ I-XI...

(ຕໍ່ຈາກໜ້າ 5)

ນຳພາລວມຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ IX ໂດຍໄດ້ຕີລາຄາສູງຕໍ່ຄວາມພະຍາຍາມອັນຕັ້ງໜ້າ ແລະ ຄວາມເປັນເຈົ້າການປະດິດສ້າງໃນການເສີມຂະຫຍາຍມູນເຊື້ອ ແລະ ບົດຮຽນຂອງພັກ ສາມາດນຳພາຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IX ໄດ້ຮັບຜົນສຳເລັດອັນສຳຄັນໃນຫລາຍດ້ານ ແລະ ມີບາງດ້ານກໍລື່ນຄາດໝາຍ. ພ້ອມກັນນັ້ນ ກໍໄດ້ສະແດງຄວາມຊົມເຊີຍຕໍ່ການເປັນຄະນະນຳທີ່ມີຄວາມສາມັກຄີເປັນເອກະພາບໜັກແໜ້ນ, ເປັນແກ່ນສານໃຫ້ແກ່ຄວາມສາມັກຄີເປັນເອກະພາບໃນທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນທັງມີຄວາມເປັນເຈົ້າການແກ້ໄຂບັນຫາການເສື່ອມຖອຍດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ການກະທຳທີ່ຝືນກົດລະບຽບຂອງພັກໃນຖັນແຖວການນຳຂັ້ນຕ່າງໆ, ພະນັກງານ ແລະ ສະມາຊິກພັກຈຳນວນໜຶ່ງ. ກອງປະຊຸມໃຫຍ່ເລັ່ງທວງໃຫ້ຄະນະບໍລິຫານງານສູນກາງພັກສະໄໝທີ X ອອກແຮງເສີມຂະຫຍາຍຈຸດດີໃນດ້ານຕ່າງໆຢ່າງແຂງແຮງ. ພ້ອມກັນນັ້ນ ກໍວາງມາດຕະການຈຳກັດແກ້ໄຂຈຸດບົກຜ່ອງ ແລະ ຂໍ້ຄົງຄ້າງທີ່ຜ່ານມາຢ່າງຈິງຈັງ, ຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງຄະນະນຳຂອງພັກໃຫ້ເດັ່ນຂຶ້ນຕື່ມອີກ.

(5). ກອງປະຊຸມໃຫຍ່ໄດ້ຮັບຟັງການລາຍງານ ກ່ຽວກັບການດັດແປງກົດລະບຽບຂອງພັກ ແລະ ໄດ້ຮັບຮອງເອົາກົດລະບຽບສະບັບປັບປຸງ ສະໄໝທີ X ເພື່ອເປັນແນວທາງທາງດ້ານການຈັດຕັ້ງຮັບຮອງການຈັດຕັ້ງປະຕິບັດແນວທາງການເມືອງໃຫ້ເປັນຈິງ. ກົດລະບຽບຂອງພັກປະຊາຊົນປະຕິວັດລາວ ສະບັບປັບປຸງ ໄດ້ຖືກຮັບຮອງເອົາຢ່າງເປັນທາງການ ໂດຍກອງປະຊຸມໃຫຍ່ ຄັ້ງທີ X ແລ້ວ ແລະ ມີຜົນບັງຄັບໃຊ້ນັບແຕ່ມື້ກອງປະຊຸມໃຫຍ່ຮັບຮອງເປັນຕົ້ນໄປ.

(6). ກອງປະຊຸມໃຫຍ່ໄດ້ເລືອກຕັ້ງຄະນະບໍລິຫານງານສູນກາງພັກ ສະໄໝທີ X ເຊິ່ງປະກອບດ້ວຍກຳມະການສົມບູນ 69 ສະຫາຍ ແລະ ກຳມະການສຳຮອງ 08 ສະຫາຍ ເພື່ອເປັນແກ່ນສານນຳພາທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກໃຫ້ມີຜົນສຳເລັດໃໝ່, ສ້າງບາດກ້າວບຸກທະລຸໃນການພັດທະນາໃຫ້ເປັນຈິງ ແລະ ພາປະເທດຊາດກ້າວຂຶ້ນຢ່າງໜັກແໜ້ນຕໍ່ໄປ.

(7). ກອງປະຊຸມຄົບຄະນະຄັ້ງປະຖົມມະລຶກ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ X ທີ່ດຳເນີນໃນຕອນເຊົ້າຂອງວັນທີ 22 ມັງກອນ 2016 ໄດ້ເປັນເອກະພາບເລືອກຕັ້ງກຳມະການກົມການເມືອງສູນກາງພັກ ເຊິ່ງປະກອບດ້ວຍ 11 ສະຫາຍ; ເປັນເອກະພາບຢ່າງສູງເລືອກເອົາ ສະຫາຍ ບຸນຍັງ ວໍລະຈິດ ເປັນເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ. ພ້ອມກັນນັ້ນ ກໍເລືອກເອົາກຳມະການຄະນະເລຂາທິການສູນກາງພັກ 09 ສະຫາຍ; ກອງປະຊຸມໄດ້ເລືອກເອົາສະຫາຍ ພັນຄຳ ວິພາວັນ ເປັນຜູ້ປະຈຳການຄະນະເລຂາທິການສູນກາງພັກ; ໃນກອງປະຊຸມຄັ້ງນີ້ ຍັງໄດ້ເລືອກປະທານ, ບັນດາຮອງປະທານຄະນະກວດກາສູນກາງພັກປະກອບດ້ວຍ 19 ສະຫາຍ ໂດຍແມ່ນສະຫາຍ ບຸນທອງ ຈິດມະນີ ເປັນປະທານ. ສຳລັບການແຕ່ງຕັ້ງທີ່ປຶກສາຂອງຄະນະບໍລິຫານງານສູນກາງພັກສະໄໝທີ X, ກອງປະຊຸມໄດ້ມອບໃຫ້ກົມການເມືອງສູນກາງພັກເປັນຜູ້ຕົກລົງແຕ່ງຕັ້ງພ້ອມທັງກຳນົດພາລະບົດບາດໜ້າທີ່ລະອຽດຕາມຫຼັງ.

(8). ກອງປະຊຸມໃຫຍ່ສະແດງຄວາມຊົມເຊີຍສັນລະເສີນພະນັກງານ, ສະມາຊິກພັກ, ທະຫານ, ຕຳຫລວດ, ຜູ້ປະກອບການຜະລິດ, ນັກທຸລະກິດ, ບໍລິການ ສັງກັດໃນທຸກພາກສ່ວນເສດຖະກິດ ແລະ ປະຊາຊົນລາວບັນດາເຜົ່າ, ບັນດາຊັ້ນຄົນໃນຂອບເຂດທົ່ວປະເທດ ແລະ ພີ່ນ້ອງເຊື້ອຊາດລາວທີ່ຮັກຊາດ ທີ່ດຳລົງຊີວິດ ແລະ ທຳມາຫາກິນຢູ່ຕ່າງປະເທດ ທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕາມຈິດໃຈມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຕະຫຼອດໄລຍະ 05 ປີຜ່ານມາ ໃຫ້ບັນລຸຜົນສຳເລັດອັນສຳຄັນໃນຫລາຍດ້ານ ອັນເປັນການສ້າງພື້ນຖານ ແລະ ທ່ວງທ່າໃໝ່ໃຫ້ແກ່ການນຳເອົາປະເທດເຮົາສືບຕໍ່ກ້າວຂຶ້ນສູ່ຈຸດໝາຍທີ່ວາງໄວ້. ພ້ອມກັນນັ້ນ ກໍຂໍສະແດງຄວາມຂອບໃຈຢ່າງຈິງໃຈ ແລະ ຄວາມຮູ້ບຸນຄຸນຢ່າງເລິກເຊິ່ງມາຍັງບັນດາປະເທດອ້າຍນ້ອງ, ບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນທີ່ໄດ້ໃຫ້ການສະໜັບສະໜູນຊ່ວຍເຫລືອອັນລ້ຳຄ່າແກ່ພາລະກິດພັດທະນາສ້າງສາປະເທດຊາດ ຂອງປະຊາຊົນເຮົາໃນ 05 ປີຜ່ານມາ.

(9). ກອງປະຊຸມໃຫຍ່ຮຽກຮ້ອງມາຍັງຄະນະພັກທຸກຂັ້ນ, ສະມາຊິກພັກທຸກສະຫາຍ ຈົ່ງເຊີດຊູຄວາມເປັນແບບຢ່າງນຳໜ້າໃນທຸກດ້ານ ນຳພາມະຫາຊົນປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງນີ້ໃຫ້ປາກົດຜົນເປັນຈິງ. ພ້ອມກັນນີ້ ກໍຮຽກຮ້ອງມາຍັງພະນັກງານ, ນັກຮົບ, ປະຊາຊົນບັນດາເຜົ່າ, ບັນດາຊັ້ນຄົນ ແລະ ພີ່ນ້ອງເຊື້ອຊາດລາວຜູ້ຮັກຊາດທີ່ດຳລົງຊີວິດ ແລະ ທຳມາຫາກິນຢູ່ຕ່າງປະເທດ ຈົ່ງເຊີດຊູນ້ຳໃຈຮັກຊາດ, ເສີມຂະຫຍາຍມານະຈິດບາກບັ່ນບຸກບືນເຂົ້າໃສ່ການປະຕິບັດໜ້າທີ່ທຳມາຫາກິນ ແລະ ສ້າງສາພັດທະນາເພື່ອສ້າງປະເທດລາວໃຫ້ມັ່ງຄັ່ງເຂັ້ມແຂງ, ປະຊາຊົນມີຄວາມຮັ່ງມີຜາສຸກ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ. ພ້ອມກັນນັ້ນ ກໍປະກອບສ່ວນຢ່າງສົມກຽດເຂົ້າໃນການສ້າງຄວາມຈະເລີນວັດທະນາຂອງປະຊາຄົມອາຊຽນກໍຄືໃນພາລະກິດແຫ່ງການເສີມສ້າງສັນຕິພາບ, ສະຖຽນລະພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາໃນພາກພື້ນ ແລະ ສາກົນ.

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XI ຂອງພັກ ດຳເນີນແຕ່ວັນທີ 13-15 ມັງກອນ 2021 ທີ່ນະຄອນຫຼວງວຽງຈັນ ພາຍໃຕ້ຄຳຂວັນ "ຍົກສູງຄວາມສາມາດນຳພາຂອງພັກ, ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນຂອງປະຊາຊົນໃນຊາດ, ຮັບປະກັນສະຖຽນລະພາບດ້ານການເມືອງຢ່າງໜັກແໜ້ນ, ຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ, ສ້າງການຫັນປ່ຽນການພັດທະນາເສດຖະກິດ-ສັງຄົມໄປສູ່ຄຸນນະພາບໃໝ່ຢ່າງແຂງແຮງ, ຍົກລະດັບຄຸນນະພາບຊີວິດຂອງປະຊາຊົນໃຫ້ສູງຂຶ້ນ, ສືບຕໍ່ນຳພາປະເທດຊາດພົ້ນຈາກສະຖານະພາບດ້ອຍພັດທະນາ ແລະ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມ". ກອງປະຊຸມໃຫຍ່ຄັ້ງນີ້ ໂດຍມີຜູ້ແທນສົມບູນເຂົ້າຮ່ວມທັງໝົດ 768 ສະຫາຍ, ຍິງ 116 ສະຫາຍ ຊຶ່ງເປັນຕົວແທນໃຫ້ແກ່ສະມາຊິກພັກທັງໝົດໃນທົ່ວປະເທດ 348.686 ສະຫາຍ, ພ້ອມແຂກຖືກເຊີນເຂົ້າຮ່ວມຈຳນວນ 147 ສະຫາຍ.

I. ກອງປະຊຸມໃຫຍ່ ໄດ້ຄົ້ນຄວ້າຢ່າງເລິກເຊິ່ງກົງໄປກົງມາ ແລະ ໄດ້ຮັບຮອງເອົາຢ່າງ ເປັນເອກະສັນລາຍງານການ ເມືອງຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ X ຊຶ່ງໄດ້ຕີລາຄາໝາກຜົນແຫ່ງການຈັດ ຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ໃນ 5 ປີຜ່ານມາ ແລະ ໄດ້ຮັບຜົນສຳເລັດອັນສຳຄັນໃຫຍ່ຫຼວງ ແລະ ຜົນງານອັນພົ້ນເດັ່ນຮອບດ້ານທີ່ຍາດມາໄດ້ ຊຶ່ງໄດ້ສ້າງໜໍ່ແໜງສຳຄັນໃນທຸກຂົງເຂດ ເພື່ອເປັນປັດໄຈ ຍູ້ການຫັນປ່ຽນໃຫ້ແຂງແຮງເລິກເຊິ່ງ ແລະ ຮອບດ້ານໃນຊຸມປີຕໍ່ໜ້າ, ສືບຕໍ່ນຳພາປະເທດຊາດກ້າວເດີນຕາມເສັ້ນທາງ ແລະ ຈຸດໝາຍສັງຄົມນິຍົມ.

ພ້ອມໆກັບຜົນສຳເລັດອັນສຳຄັນດັ່ງກ່າວກອງປະຊຸມໃຫຍ່ຍັງໄດ້ເປັນເອກະພາບຢ່າງ ພາວະວິໄສ ດ້ານຂໍ້ຄົງຄ້າງ, ຂໍ້ຂາດຕົກບົກຜ່ອງ ໃນການນຳ ພາຊີ້ນຳຂອງພັກກໍຄືການຈັດຕັ້ງປະຕິບັດໜ້າທີ່, ວຽກງານຈຸດສຸມໃນບາງດ້ານທີ່ບໍ່ສາມາດບັນລຸຜົນຕາມຄາດໝາຍທີ່ວາງອອກ, ພ້ອມທັງຊີ້ໃຫ້ເຫັນສາ ເຫດຕົ້ນຕໍ ເພື່ອກຳນົດທິດທາງມາດຕະການແກ້ໄຂທີ່ສອດຄ່ອງ ແລະ ແທດເໝາະ ເພື່ອຮັບປະກັນໃຫ້ແກ່ການຫັນປ່ຽນໃໝ່ຢ່າງຈິງຈັງ ໃນການຈັດຕັ້ງປະຕິບັດແນວທາງຂອງພັກໃນຕໍ່ໜ້າ. ພ້ອມນັ້ນ ກອງປະຊຸມຍັງໄດ້ປະເມີນຜົນ ກວມລວມບັນດາຜົນສຳເລັດ ແລະ ບາງດ້ານທີ່ຕ້ອງໄດ້ສືບຕໍ່ເອົາໃຈໃສ່ແກ້ໄຂ ແລະ ຍົກລະດັບ ກ່ຽວກັບການສ້າງບັນດາປະຖົມປັດໄຈໃຫ້ແກ່ການກ້າວເດີນສູ່ສັງຄົມນິຍົມຕາມແນວທາງປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການຂອງພັກເຮົາ ຊຶ່ງຊີ້ບອກເຖິງສະພາວະຄວາມເປັນຈິງທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດທີ່ພັກເຮົາຕ້ອງກຳແໜ້ນ ແລະ ພິຈາລະນາ ຢ່າງເປັນລະບົບເພື່ອເປັນພື້ນຖານໃນການກຳນົດທິດທາງ ໃນການສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນໃຫ້ສົມບູນຍິ່ງຂຶ້ນໃນຕໍ່ໜ້າ.

ຍືນບົນຈິດໃຈສ້າງການຫັນປ່ຽນໃໝ່, ກອງປະຊຸມໃຫຍ່ໄດ້ຮັບຮອງເອົາການເພີ່ມເຕີມບົດຮຽນ 4 ປະການທີ່ຖອດຖອນໄດ້ຈາກພຶດຕິກຳແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ກໍຄືພຶດຕິກຳຕົວຈິງໃນການນຳພາຂອງພັກເຮົາ ໃນຫຼາຍສິບປີຜ່ານມາ ເພື່ອເປັນບົດຮຽນ ແລະ ເປັນບ່ອນອີງສຳຄັນ ໃນການປັບປຸງການນຳພາຊີ້ນຳ ແລະ ການຈັດຕັ້ງປະຕິບັດ ແນວທາງນະໂຍບາຍຂອງພັກ ໃນຕໍ່ໜ້າດັ່ງນີ້:

(1). ໃນການຍົກລະດັບຄວາມສາມາດ ແລະ ຄຸນນະພາບການນຳພາຂອງພັກ, ມີຄວາມຈຳເປັນຕ້ອງຮັບປະກັນການກຳນົດເນື້ອໃນໜ້າທີ່ການເມືອງໃຫ້ຖືກຕ້ອງແທດຕົວຈິງ ແລະ ມີຄວາມເປັນໄປໄດ້ໃນທາງປະຕິບັດ ຄຽງຄູ່ກັບການແກ້ໄຂບັນຫາດ້ານການຈັດຕັ້ງ, ການຈັດວາງບຸກຄະລາກອນ, ແບບແຜນການນຳພາ-ຊີ້ນຳ ແລະ ການຄຸ້ມຄອງດ້ານລະ ບຽບວິໄນ.

(2). ການພັດທະນາເສດຖະກິດຂອງຊາດ ຕ້ອງມີການສົມທົບແໜ້ນ ລະຫວ່າງການຂະຫຍາຍພື້ນຖານການຜະລິດ ແລະ ບໍລິການຂະໜາດໃຫຍ່ ຢ່າງມີຈຸດສຸມ, ສ້າງເປັນຂະແໜງການ ແລະ ຜະລິດຕະພັນປາຍແຫຼມກັບການຮັບປະກັນໃຫ້ຊາວຊົນນະບົດ, ຜູ້ປະກອບການມີການພັດທະນາທີ່ເລີ່ມຈາກສ້າງຄວາມສາມາດເພິ່ງຕົນເອງ ແລະ ພັດທະນາຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນເລື້ອຍໆ ເພື່ອຮັບປະກັນການສ້າງຖານເສດຖະກິດທີ່ເຂັ້ມແຂງ, ເປັນເຈົ້າຕົນເອງ ແລະ ແກ້ໄຂການຫຼຸດໂຕນແບບບໍ່ເປັນທຳ.

(3). ຮັບປະກັນການພັດທະນາຊັບພະຍາກອນມະນຸດທັງດ້ານສະໜອງຄວາມຕ້ອງການ ທັງສ້າງເປັນກຳລັງຂັບເຄື່ອນໃຫ້ແກ່ການພັດທະນາດ້ານເສດຖະກິດ-ສັງຄົມ ແລະ ການປົກປ້ອງ-ເສີມຂະຫຍາຍສິດຜົນປະໂຫຍດຂອງພົນລະເມືອງ, ຄຸນຄ່າຄວາມເປັນມະນຸດ ແລະ ຄວາມສີວິໄລດ້ານຈິດໃຈຂອງຄົນລາວ.

(4). ຜັນຂະຫຍາຍ ແລະຈັດຕັ້ງປະຕິບັດບັນດາມະຕິຄຳສັ່ງຂອງພັກ ແລະ ແຜນການ, ໂຄງການພັດທະນາຂອງລັດຢູ່ແຕ່ລະຂັ້ນຕ້ອງບົນພື້ນຖານການສົມທົບລະຫວ່າງຮັບປະກັນການຕົກລົງບັນຫາຕົວຈິງແບບໝູ່ຄະນະຢ່າງເຂັ້ມງວດກັບການເຊີດຊູບົດບາດນຳພາຊີ້ນຳ-ບັນຊາຂອງຜູ້ເປັນຫົວໜ້າ, ເຮັດໃຫ້ທຸກຂະບວນການໄດ້ຮັບການກະຕຸ້ນ ແລະ ຂັບເຄື່ອນຖືກທິດ, ຕໍ່ເນື່ອງ, ແຂງແຮງ ແລະ ກ້າວສູ່ເປົ້າໝາຍທີ່ວາງອອກ.

ເພື່ອສືບຕໍ່ນຳພາ ພາລະກິດປ່ຽນແປງໃໝ່ໄປສູ່ຈຸດໝາຍຢ່າງມີໄຊ ໃນຊຸມປີຕໍ່ໜ້າ, ກອງປະຊຸມໃຫຍ່ໄດ້ຢືດໝັ້ນ ແລະ ເອກະພາບກັນສືບຕໍ່ບູລະນະປະຊາທິປະໄຕ ປະຊາຊົນ ໃຫ້ສົມບູນຍິ່ງຂຶ້ນ, ສ້າງການຫັນປ່ຽນແຂງແຮງເລິກເຊິ່ງ ແລະຮອບດ້ານ ເພື່ອກ້າວເດີນສູ່ສັງຄົມນິຍົມ ໂດຍຖືເອົາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນໜ້າທີ່ພື້ນຖານ, ການພັດທະນາ ແລະ ການແກ້ໄຂບັນຫາເສດຖະກິດເປັນໜ້າທີ່ໃຈກາງ, ການພັດທະນາຊັບພະຍາກອນມະນຸດ ແລະ ສະໜອງແຮງງານສີມືແກ່ບັນດາໂຄງການພັດທະນາເປັນໜ້າທີ່ແຖວໜ້າ, ການປັບປຸງຄຸນນະພາບຂອງວຽກງານພັກ-ພະນັກງານເປັນອັນຕັດສິນ ແນໃສ່ເຮັດໃຫ້ບັນດາປະຖົມປັດໄຈ ການກ້າວຂຶ້ນເດີນສູ່ສັງຄົມນິຍົມທີ່ມີໃນປັດຈຸບັນໄດ້ຮັບການປັບປຸງຍົກລະດັບຢ່າງຕໍ່ເນື່ອງ ແລະ ສາມາດກາຍເປັນອົງປະກອບສຳຄັນພື້ນຖານໃຫ້ແກ່ການກໍ່ຕົວ ແລະ ຂະຫຍາຍຕົວຂອງຮູບຖານເສດຖະກິດ-ສັງຄົມສັງຄົມນິຍົມໄລຍະຕົ້ນ, ເຮັດໃຫ້ບັນດາຄຸນລັກສະນະອັນດີເລີດຂອງລະບອບສັງຄົມນິຍົມຢູ່ປະເທດເຮົາ ສະແດງອອກນັບມື້ພົ້ນເດັ່ນຂຶ້ນເລື້ອຍໆໃນຊີວິດຕົວຈິງຂອງປະຊາຊົນ.

ບົນພື້ນຖານດັ່ງກ່າວ ກອງປະຊຸມໃຫຍ່ໄດ້ກຳນົດທັດສະນະ ແລະ ຮັບຮອງເອົາ 8 ແຜນນະໂຍບາຍໃຫຍ່ເພື່ອສູ້ຊົນ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ສຳລັບ 5 ປີໃນຕໍ່ໜ້າ.

ກອງປະຊຸມໃຫຍ່ໄດ້ມອບໃຫ້ຄະນະບໍລິຫານງານສູນກາງພັກ ສະໄໝທີ XI ຊີ້ນຳຈັດຕັ້ງການຄົ້ນຄວ້າ, ເຊື່ອມຊຶມຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງນີ້ຢ່າງເປັນລະບົບ, ເລິກເຊິ່ງ ໂດຍສະເພາະ ແມ່ນສະມາຊິກພັກ, ພະນັກງານຜູ້ທີ່ ເປັນຫຼັກແຫຼ່ງຢູ່ທຸກຂັ້ນເອົາໃຈໃສ່ຄົ້ນຄວ້າກຳແໜ້ນເນື້ອໃນ ຂອງລາຍງານການເມືອງ, ສຸມສະຕິປັນຍາ, ກຳລັງວັງຊາເປັນແບບຢ່າງນຳໜ້າຈັດຕັ້ງປະຕິບັດໃຫ້ເກີດໝາກຜົນ; ພ້ອມກັນນີ້ກໍຊີ້ນຳອົງການລັດໃຫ້ຫັນເປັນນິຕິກຳ, ເປັນແຜນງານ ແລະ ໂຄງການວຽກງານລະອຽດໃຫ້ໄວ ເພື່ອຍາດແຍ່ງເວລາຈັດຕັ້ງປະຕິບັດໂດຍໄວ ແລະ ໄດ້ຮັບຜົນສຳເລັດອັນສະຫງ່າງາມ.

II. ກອງປະຊຸມໃຫຍ່ໄດ້ຮັບຟັງການລາຍງານ ແລະ ສະແດງຄວາມຍ້ອງຍໍຊົມເຊີຍລັດຖະບານ ຊຸດທີ VIII ທີ່ໄດ້ຕັ້ງໜ້າປະຕິບັດ ແລະ ສູ້ຊົນໃຫ້ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII ໄດ້ຮັບຜົນສຳເລັດເປັນຢ່າງດີ; ພ້ອມນັ້ນ ກໍສະແດງຄວາມເຫັນດີເຫັນພ້ອມ ແລະ ສະໜັບສະໜູນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 (2021-2025) ຊຶ່ງແມ່ນແຜນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ເປັນແຜນງານ, ໂຄງການລະດັບຊາດ, ລວມທັງຂອບການລົງທຶນ ສຳລັບໂຄງການເຫຼົ່ານັ້ນ, ໃນນັ້ນໄດ້ກຳນົດອອກເປັນ 6 ເປົ້າໝາຍໃຫຍ່ ເພື່ອສືບຕໍ່ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງຄື:

(1). ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະຍືນຍົງ ໂດຍຍູ້ການເຕີບໂຕເສດຖະກິດແຫ່ງ

ອ່ານຕໍ່ໜ້າ 7

## ກອງປະຊຸມຄັ້ງທີ I-XI...

(ຕໍ່ຈາກໜ້າ 7)

ຊາດໃຫ້ບັນລຸ 4% ຂຶ້ນໄປ.

(2). ພັດທະນາຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນທີ່ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າແລະນຳໃຊ້ວິທະຍາສາດ-ເຕັກໂນໂລຊີເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມການຜະລິດ ແລະ ການບໍລິການ.

(3). ຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ.

(4). ການປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດທຳມະຊາດ.

(5). ສ້າງພື້ນຖານໂຄງລ່າງທີ່ມີຄວາມເຂັ້ມແຂງ, ນຳໃຊ້ທ່າແຮງ, ກາລະໂອກາດຈາກທີ່ຕັ້ງພູມສາດຂອງປະເທດ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ.

(6). ຄຸ້ມຄອງ-ບໍລິຫານລັດ ໃຫ້ມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທຳ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະ ເຂັ້ມງວດ.

ທັງໝົດນີ້ມອບໃຫ້ຄະນະບໍລິຫານງານສູນກາງພັກຊີ້ນຳລັດຖະບານສຸມຄວາມພະຍາຍາມ ກໍຄືເສີມຂະຫຍາຍຄວາມອາດສາມາດບົ່ມຊ້ອນ ແລະ ກຳລັງແຮງສັງລວມເຂົ້າໃສ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ເປັນຈິງ.

III. ກອງປະຊຸມໃຫຍ່ໄດ້ຮັບຮອງເອົາບົດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ X ຊຶ່ງໄດ້ຕີລາຄາສູງຕໍ່ຄວາມບາກບັ່ນພະຍາຍາມອັນຕັ້ງໜ້າແລະຄວາມເປັນເຈົ້າການປະດິດສ້າງໃນການເສີມຂະຫຍາຍມູນເຊື້ອ ແລະ ບົດຮຽນຂອງພັກອັນມີ ສະຫາຍ ບຸນຍັງ ວໍລະຈິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ເປັນຜູ້ນຳໜ້າ ສາມາດນຳພາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ໄດ້ຮັບຜົນສຳເລັດອັນສຳຄັນໃນຫຼາຍດ້ານ; ພ້ອມນັ້ນ ກໍໄດ້ສະແດງຄວາມຊົມເຊີຍຕໍ່ການເປັນຄະນະນຳທີ່ມີຄວາມສາມັກຄີເປັນເອກະພາບອັນໜັກແໜ້ນເຂັ້ມແຂງ, ເປັນຫຼັກແຫຼ່ງແກ່ນສານໃຫ້ແກ່ຄວາມສາມັກຄີເປັນເອກະພາບໃນທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວ, ເປັນເຈົ້າການຢ່າງເຂັ້ມງວດໃນການຕໍ່ຖອຍ ແລະແກ້ໄຂການກະທຳທີ່ຝືນກັບກົດລະບຽບຂອງພັກ ໃນຖັນແຖວການນຳ, ສະມາຊິກພັກ-ພະນັກງານຂັ້ນຕ່າງໆ. ກອງປະຊຸມໃຫຍ່ເລັ່ງທວງໃຫ້ຄະນະບໍລິຫານງານສູນກາງພັກສະໄໝທີ XI ອອກແຮງເສີມຂະຫຍາຍຈຸດດີ ໃນດ້ານຕ່າງໆຢ່າງແຂງແຮງ, ພ້ອມທັງວາງມາດຕະການກຳຈັດ, ແກ້ໄຂຈຸດບົກຜ່ອງ ແລະ ຄົງຄ້າງທີ່ຜ່ານມາຢ່າງຈິງຈັງ, ຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງຄະນະນຳຂອງສູນກາງພັກໃຫ້ສູງຂຶ້ນຕື່ມອີກ, ເປັນຫຼັກແຫຼ່ງນຳໜ້າສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນຊຸມປີຕໍ່ໆໄປ.

IV. ກອງປະຊຸມໃຫຍ່ໄດ້ຮັບຟັງການລາຍງານ ກ່ຽວກັບການດັດແປງກົດລະບຽບຂອງພັກແລະໄດ້ຮັບຮອງເອົາກົດລະບຽບຂອງພັກ ສະໄໝທີ XI, ເພື່ອໃຫ້ສອດຄ່ອງຮອງຮັບການຈັດຕັ້ງປະຕິບັດແນວທາງການເມືອງຂອງພັກ, ຊຸກຍູ້ວຽກງານກໍ່ສ້າງພັກ ເຮັດໃຫ້ພັກເຮົາມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ, ມີຄວາມສາມາດພຽງພໍໃນການນຳພາ ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃນໄລຍະໃໝ່ກ້າວຂຶ້ນຕາມທິດສັງຄົມນິຍົມ.

ກົດລະບຽບຂອງພັກ ປະຊາຊົນ ປະຕິວັດລາວ ສະບັບປັບປຸງມີຜົນບັງຄັບໃຊ້ນັບແຕ່ມື້ກອງປະຊຸມໃຫຍ່ຮັບຮອງເອົາ ເປັນຕົ້ນໄປ; ຮຽກຮ້ອງໃຫ້ການຈັດຕັ້ງພັກທຸກຂັ້ນ ແລະ ສະມາຊິກພັກທຸກສະຫາຍ ປະຕິບັດກົດລະບຽບຂອງພັກຢ່າງເຂັ້ມງວດ.

V. ກອງປະຊຸມໃຫຍ່ໄດ້ເລືອກຕັ້ງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ຊຶ່ງປະກອບດ້ວຍກຳມະການສົມບູນ 71 ສະຫາຍ ແລະ ກຳມະການສຳຮອງ 10 ສະຫາຍ ເພື່ອເປັນແກ່ນສານນຳພາທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ມີຜົນສຳເລັດ, ສ້າງບາດກ້າວບຸກທະລຸ ໃນການສ້າງການຫັນປ່ຽນທີ່ແຂງແຮງໃນການພັດທະນາ ແລະ ພາປະເທດຊາດກ້າວຂຶ້ນຢ່າງໜັກແໜ້ນຕໍ່ໄປ.

ກອງປະຊຸມຄົບຄະນະຄັ້ງປະຖົມມະລຶກຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ໄດ້ເປັນເອກະພາບເລືອກຕັ້ງກຳມະການກົມການເມືອງສູນກາງພັກ ຊຶ່ງປະກອບດ້ວຍ 13 ສະຫາຍ; ເລືອກເອົາກຳມະການຄະນະເລຂາທິການສູນກາງພັກ 9 ສະຫາຍ; ກອງປະຊຸມໄດ້ເປັນເອກະພາບຢ່າງສູງເລືອກເອົາ ສະຫາຍ ທອງລຸນ ສີສຸລິດ ເປັນເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ; ພ້ອມກັນນັ້ນກໍໄດ້ເລືອກເອົາ ສະຫາຍ ບຸນທອງ ຈິດມະນີ ເປັນຜູ້ປະຈຳການຄະນະເລຂາທິການສູນກາງພັກ. ໃນກອງປະຊຸມຍັງໄດ້ເລືອກປະທານ, ບັນດາຮອງປະທານຄະນະກວດກາສູນກາງພັກ ປະກອບດ້ວຍ 6 ສະຫາຍ ໂດຍແມ່ນ ສະຫາຍ ຄຳພັນ ພົມມະທັດ ເປັນປະທານ.

ກອງປະຊຸມ ໄດ້ຮຽກຮ້ອງມາຍັງຄະນະພັກທຸກຂັ້ນ, ສະມາຊິກພັກທຸກສະຫາຍ ຈົ່ງເຊີດຊູຄວາມເປັນແບບຢ່າງນຳໜ້າໃນທຸກດ້ານ ນຳພາມະຫາຊົນປະຕິບັດມະຕິຂອງກອງປະຊຸມໃຫຍ່ຄັ້ງນີ້ ໃຫ້ປະກົດຜົນເປັນຈິງ. ພ້ອມກັນນີ້ກໍຮຽກຮ້ອງມາຍັງພະນັກງານ, ນັກຮົບ, ປະຊາຊົນລາວບັນດາເຜົ່າ, ບັນດາຊັ້ນຄົນ ແລະ ພີ່ນ້ອງເຊື້ອຊາດລາວຜູ້ຮັກຊາດທີ່ດຳລົງຊີວິດ ແລະທຳມາຫາກິນຢູ່ຕ່າງປະເທດ ຈົ່ງເຊີດຊູນ້ຳໃຈຮັກຊາດ, ເສີມຂະຫຍາຍມານະຈິດບາກບັ່ນບຸກບືນເຂົ້າໃສ່ການປະຕິບັດໜ້າທີ່, ທຳມາຫາກິນ ແລະ ສ້າງສາ, ບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມຢ່າງໜັກແໜ້ນ.

## 9 ຄຳເຫັນ...

(ຕໍ່ຈາກໜ້າ 1)

ແລະ ກິລາ, ສະຖາບັນການສຶກສາຕ່າງໆ, ບັນດາຄູ-ອາຈານ, ນັກຮຽນ-ນັກສຶກສາຈຶ່ງໄດ້ທົບທວນ, ທວນຄືນມູນເຊື້ອອັນດີ ແລະ ຜົນສຳເລັດໃນໄລຍະຜ່ານມາ ເພື່ອນຳມາແກ້ໄຂບັນຫາຕ່າງໆຂອງຂົງເຂດວຽກງານການສຶກສາໃນປັດຈຸບັນ ໃຫ້ລຸລ່ວງ, ຜ່ານຜ່າໄປໄດ້ໂດຍດີ.

2.ການສຶກສາເປັນວຽກງານທີ່ຕິດພັນກັບທຸກບ້ານ, ທຸກຄອບຄົວ ແລະ ແຕ່ລະບຸກຄົນ ເຊິ່ງເປັນວຽກງານທີ່ມີຂອບເຂດກວ້າງຂວາງ, ມີຫຼາຍບັນຫາທີ່ມີທັງດ້ານຕັ້ງໜ້າ ແລະສິ່ງທ້າທາຍ ສາມາດກ່າວໄດ້ວ່າ ການຈັດຕັ້ງປະຕິບັດວຽກງານສຶກສາ ເປັນສະໜາມຮົບອັນໜຶ່ງທີ່ຈະຕ້ອງໄດ້ພ້ອມກັນວາງຍຸດທະສາດ, ແຜນການ, ວາງມາດຕະການ ເພື່ອເຮັດໃຫ້ບັນຫາຕ່າງໆໄດ້ຮັບການແກ້ໄຂ; ຍ້ອນເປັນວຽກງານສຳຄັນ ແລະ ຕິດພັນກັບສັງຄົມຢ່າງກວ້າງຂວາງ ຄະນະພັກ, ຄະນະນຳຂອງກະຊວງ, ຂະແໜງການສຶກສາຂອງທ້ອງຖິ່ນ ຈະຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ, ຄວາມເປັນຫ່ວງເປັນໄຍຂອງພັກ-ລັດ ໃຫ້ພໍ່ແມ່ປະຊາຊົນໄດ້ຮັບຮູ້, ເຂົ້າໃຈ ແລະ ໃຫ້ການຮ່ວມມື.

3. ການພັດທະນາເສດຖະກິດ ແມ່ນມີຄວາມຮຽກຮ້ອງຕ້ອງການບຸກຄະລາກອນທີ່ມີຄວາມຮູ້ທາງດ້ານເຕັກນິກ, ເຕັກໂນໂລຊີ ຈຶ່ງຈະສາມາດພັດທະນາເສດຖະກິດໄປຕາມທິດຫັນເປັນອຸດສາຫະກຳເທື່ອລະກ້າວໄດ້ ຄືດັ່ງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກຂອງປະຊາຊົນບັນດາເຜົ່າ ໄດ້ກ່າວໄວ້ວ່າ:"ການປະຕິວັດເຕັກນິກແມ່ນຂໍກຸນແຈຕົ້ນຕໍ, ແຕ່ຄັນບໍ່ມີຄົນເຮັດວຽກວິທະຍາສາດ-ເຕັກນິກ, ຮູ້ໃຊ້ວິທະຍາສາດ-ເຕັກນິກແລ້ວກະໂຕເຕັກນິກເອງ ກໍບໍ່ສາມາດກ້າວໜ້າໄດ້ ແລະ ກໍບໍ່ສາມາດນຳເອົາອັນໃດທີ່ເປັນປະໂຫຍດມາໃຫ້ສັງຄົມໄດ້ເລີຍ".

4. ເອົາໃຈໃສ່ວຽກງານການສ້າງ, ບຳລຸງຖັນແຖວຄູ-ອາຈານ ທັງໃນໄລຍະສັ້ນ ແລະ ໄລຍະຍາວ ເພື່ອສູ້ຊົນເຮັດໃຫ້ໂຮງຮຽນມີຄູພຽງພໍຕາມເກນທີ່ວາງໄວ້; ຄູເປັນບຸກຄະລາກອນທີ່ມີຄວາມສຳຄັນຂອງວຽກງານສຶກສາ ເຊິ່ງໄດ້ໃຫ້ຂະໜານນາມແກ່ຄູວ່າເປັນແມ່ພິມຂອງຊາດ, ເປັນພໍ່ແມ່ຜູ້ທີສອງ, ເປັນຜູ້ມີບົດບາດສຳຄັນຕໍ່ການສຶກສາ. ສະນັ້ນ, ຂະແໜງການສຶກສາ ຕ້ອງໄດ້ເອົາໃຈໃສ່ຄົ້ນຄວ້າການວາງນະໂຍບາຍ, ອອກນິຕິກຳກ່ຽວກັບການຊຸກຍູ້, ສົ່ງເສີມທີ່ຖືກຕ້ອງ, ເໝາະສົມຕໍ່ຄູ, ສອດຄ່ອງກັບສະພາບເສດຖະກິດ-ສັງຄົມ. ໃນສະພາບເສດຖະກິດ-ການເງິນຂອງປະເທດເຮົາມີຄວາມຫຍຸ້ງຍາກແຕ່ການປະຕິບັດນະໂຍບາຍຕໍ່ຄູ ຕ້ອງໃຫ້ໄປຕາມກົດໝາຍ, ລະບຽບການຢ່າງເຂັ້ມງວດ, ທັນເວລາ; ຮີບຮ້ອນແກ້ໄຂບັນຫາການປະຕິບັດນະໂຍບາຍຕ່າງໆຕໍ່ຄູທີ່ແຕກຕ່າງຈາກພາກສ່ວນອື່ນ ທັງນີ້ກໍເພື່ອຮັບປະກັນເຮັດໃຫ້ຄູມີຄວາມອຸ່ນອຽນທຸ່ນທ່ຽງໃນການປະຕິບັດໜ້າທີ່ວຽກງານທີ່ພັກ-ລັດມອບໝາຍໃຫ້ ມີຄຸນນະພາບ ແລະ ມີປະສິດທິຜົນ.




5. ສຸມໃສ່ບຳລຸງສ້າງຄູໃນທຸກຂະແໜງຮຽນ ໃຫ້ມີລະດັບຄວາມຮູ້, ຄວາມສາມາດ ແລະຈິດໃຈຝຶກຝົນປະຕິວັດສົມກັບໜ້າທີ່ຮັບຜິດຊອບອັນສູງສົ່ງ ແລະມີກຽດສະຫງ່າ. ເອົາໃຈໃສ່ການສ້າງໂຮງຮຽນສ້າງຄູ ໃຫ້ມີຄຸນນະພາບ, ຕອບສະໜອງກັບການພັດທະນາດ້ານການສຶກສາໃນແຕ່ລະໄລຍະ; ຊຸກຍູ້, ສົ່ງເສີມໃຫ້ນັກຮຽນເກັ່ງ ເພື່ອສ້າງເປັນຄູສອນ, ສ້າງເງື່ອນໄຂໃຫ້ຄູເກັ່ງໄດ້ມີໂອກາດສິດສອນ ເພື່ອໃຫ້ມີນັກຮຽນເກັ່ງເພີ່ມຂຶ້ນຕາມວິຊາການດ້ານຕ່າງໆ; ສຸມໃສ່ສ້າງຖັນແຖວຄູ-ອາຈານ ໃຫ້ໄດ້ມາດຕະຖານດ້ານວິຊາການ ແລະ ມີຈັນຍາບັນໜັກແໜ້ນ ເພື່ອສະໜອງໃຫ້ການສຶກສາທຸກລະດັບ.

6. ການສ້າງສາພັດທະນາເສດຖະກິດ-ສັງຄົມໃນຂະແໜງການຕ່າງໆໄດ້ຂະຫຍາຍຕົວ ເຮັດໃຫ້ເກີດມີຄວາມຕ້ອງການນັກວິຊາການດ້ານຕ່າງໆເປັນຈຳນວນຫຼວງຫຼາຍ, ແຕ່ການສະໜອງບຸກຄະລາກອນໃຫ້ແກ່ໂຄງການລົງທຶນຕ່າງໆໃນໄລຍະຜ່ານມາແມ່ນບໍ່ພຽງພໍກັບຄວາມຕ້ອງການ ເກີດມີການນຳເຂົ້າຜູ້ຊ່ຽວຊານ, ນັກວິຊາການຈາກຕ່າງປະເທດ ເຮັດໃຫ້ຄົນລາວເສຍໂອກາດໃນການມີວຽກເຮັດງານທຳທີ່ດີ, ມີລາຍໄດ້ທີ່ດີ ແລະ ໝັ້ນຄົງ; ເພື່ອແກ້ໄຂບັນຫາດັ່ງກ່າວຈຶ່ງສະເໜີໃຫ້ຄະນະພັກ, ຄະນະນຳຂອງກະຊວງສຶກສາທິການ ແລະ ກິລາ, ຂະແໜງການສຶກສາຂອງທ້ອງຖິ່ນຕ່າງໆ ຈົ່ງຖືສຳຄັນການວາງແຜນສ້າງບຸກຄະລາກອນໂຮງຮຽນຕ່າງໆໃຫ້ມີຄວາມສອດຄ່ອງກັບຄວາມຮຽກຮ້ອງຕ້ອງການໃນການພັດທະນາກ້າວໄປສູ່ການສ້າງສັນຍາຜູກພັນໃນການສະໜອງບຸກຄະລາກອນທີ່ມີຄຸນນະພາບໃຫ້ແກ່ການຜະລິດຕ່າງໆ.

7.ສະເໜີມາຍັງນັກສຶກສາທຸກຄົນ ຈົ່ງໄດ້ເອົາໃຈໃສ່ຕັ້ງໜ້າຄົ້ນຄວ້າຮ່ຳຮຽນເອົາວິຊາຄວາມຮູ້ຈາກຄູ-ອາຈານ ໃຫ້ກາຍເປັນນັກສຶກສາທີ່ມີຄວາມຮູ້ຄວາມສາມາດ, ກາຍເປັນບຸກຄະລາກອນທີ່ສຳຄັນປະກອບສ່ວນເຂົ້າໃນການສ້າງສາພັດທະນາເສດຖະກິດ-ສັງຄົມຂອງປະເທດ; ການມາສຶກສາຢູ່ສະຖາບັນແຫ່ງນີ້ບາງຄົນກໍຈາກບ້ານມາໄກ ຈຶ່ງຂໍໃຫ້ມີຄວາມມານະອົດທົນ, ຜ່ານຜ່າອຸປະສັກນາໆປະການ ເພື່ອຜົນສຳເລັດໃນວັນໜຶ່ງຕໍ່ໜ້າ ຈະໄດ້ມີວຽກເຮັດງານທຳທີ່ດີ, ມີລາຍຮັບທີ່ໝັ້ນຄົງເຊິ່ງເປັນຄວາມມຸ່ງຫວັງຂອງນັກສຶກສາທຸກຄົນ ກໍຄືພໍ່ແມ່ ແລະ ຍາດຕິພີ່ນ້ອງ ຈຶ່ງຂໍໃຫ້ທຸກຄົນໄດ້ຖືເອົາໂອກາດນີ້ຕັ້ງໜ້າຄົ້ນຄວ້າຮ່ຳຮຽນໃຫ້ປະສົບຜົນສຳເລັດ.

8.ບັນດານັກຮຽນ, ນັກສຶກສາທີ່ກຳລັງຮຽນຢູ່ມະຫາວິທະຍາໄລແຫ່ງຊາດລາວ ກໍຄືບັນດານັກຮຽນ, ນັກສຶກສາ ທີ່ຮຽນຢູ່ສະຖານການສຶກສາຕ່າງໆໃນທົ່ວປະເທດ ຂໍຈົ່ງເຂົ້າໃຈວ່າຕົນເອງເປັນອະນາຄົດຂອງປະເທດຊາດ, ເປັນຜູ້ສືບທອດພາລະກິດທີ່ນັກປະຕິວັດຮຸ່ນກ່ອນ ໄດ້ຕໍ່ສູ້ດ້ວຍຊີວິດ, ເລືອດເນື້ອ ເພື່ອນຳເອົາຄວາມເປັນເອກະລາດ, ອິດສະຫຼະພາບ ມາໃຫ້ປະຊາຊົນລາວບັນດາເຜົ່າ ເຊິ່ງໃນຕໍ່ໜ້ານີ້ ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໄດ້ເປັນພັນທະແລະໜ້າທີ່ຂອງລູກຫຼານຮຸ່ນຕໍ່ໄປ; ເພື່ອເຮັດສຳເລັດໜ້າທີ່ອັນສຳຄັນ ແລະ ມີກຽດສະຫງ່າດັ່ງກ່າວ ຂໍໃຫ້ທຸກຄົນຈົ່ງເພີ່ມທະວີນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນຂອງຕົນ, ຂໍໃຫ້ເຂົ້າໃຈວ່າ ມີແຕ່ຄົນລາວເຮົາເທົ່ານັ້ນ ທີ່ຈະເອີ້ນວ່າປະເທດລາວເປັນປະເທດຂອງຂ້ອຍ, ສ່ວນຄົນປະເທດອື່ນ ອາດຈະບໍ່ຄຳນຶງເຖິງບັນຫາດັ່ງກ່າວ.

9.ວຽກງານຂົງເຂດການສຶກສາ ທີ່ຄະນະພັກ, ຄະນະນຳຂອງກະຊວງສຶກສາທິການ ແລະ ກິລາ ຈະຕ້ອງໄດ້ເອົາໃຈໃສ່ແມ່ນການພັດທະນາການສຶກສາແຫ່ງຊາດໃຫ້ມີຄຸນນະພາບ, ສ້າງໂອກາດ ແລະ ເງື່ອນໄຂໃຫ້ປະຊາຊົນໄດ້ຮັບການສຶກສາຢ່າງທົ່ວເຖິງ ໂດຍສະເພາະປະຊາຊົນຢູ່ເຂດຫ່າງໄກສອກຫຼີກ, ຊົນເຜົ່າ, ແມ່ຍິງ, ເດັກນ້ອຍ, ຜູ້ດ້ອຍໂອກາດ ແລະ ຜູ້ພິການ; ເພື່ອເຮັດສຳເລັດວຽກງານດັ່ງກ່າວສະເໜີໃຫ້ເອົາໃຈໃສ່ການຕິດຕາມ, ເກັບກຳຂໍ້ມູນວຽກງານການສຶກສາໃຫ້ຄົບຖ້ວນ ເພື່ອວາງແຜນການພັດທະນາການສຶກສາ ໃຫ້ທົ່ວເຖິງ ແລະ ມີຄຸນນະພາບ.

ຕອນທ້າຍ, ທ່ານ ປອ. ໄຊສົມພອນ ພົມວິຫານ ຍັງສະເໜີໃຫ້ຄະນະພັກ, ຄະນະນຳຂອງກະຊວງສຶກສາທິການ ແລະ ກິລາ ພັດທະນາການສຶກສາໃຫ້ໄດ້ຄຸນນະພາບ, ໄດ້ມາດຕະຖານ, ສືບຕໍ່ນຳພາວຽກງານການສຶກສາຂອງປະເທດເຮົາ ຫຍັບເຂົ້າກັບພາກພື້ນ ແລະ ສາກົນ ເທື່ອລະກ້າວ.




# ສົງຄາມການຄ້າ

**# ດັ້ນກົບເມກ**

ເລື່ອງຂອງສົງຄາມເສດຖະກິດ ຫຼື ສົງຄາມການຄ້າ ບໍ່ໄດ້ເກີດມື້ວານຊືນ ຫຼື ຮ້ອຍປີຫຼັງ ແຕ່ມັນເກີດຂຶ້ນພ້ອມກັບມະນຸດຮູ້ຈັກຄ້າຂາຍ, ນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດ ເຮັດໃຫ້ມະນຸດທີ່ໄຂວ່ຄວ້າສະແຫວງຫາຜົນປະໂຫຍດ ຕັກຕວງເອົາຊັບສິນໃຫ້ຫຼາຍກວ່າໝູ່ຈຶ່ງເກີດການແຂ່ງຂັນທີ່ເອີ້ນວ່າ: ສົງຄາມການຄ້າ ເຊິ່ງເນື້ອແທ້ກໍສະແດງອອກແຈ້ງວ່າໃຜມີກຳລັງເສດຖະກິດເໜືອກວ່າ ຜູ້ນັ້ນກໍຈະມີທ່າເປັນຜູ້ຖືໄພ້ເໜືອກວ່າຄູ່ຕໍ່ສູ້.

ສົງຄາມການຄ້າເກີດຂຶ້ນລະຫວ່າງປະເທດມະຫາອຳນາດຕ່າງກໍໃຊ້ກຳແພງພາສີກີດກັນ ໂດຍນຳໃຊ້ຍຸດທະສາດຕັ້ງກຳແພງພາສີສູງຂຶ້ນໃນສິນຄ້າຂອງຄູ່ແຂ່ງ ຖ້າວ່າຈະນຳເຂົ້າມາຂາຍໃນປະເທດຂອງຕົນ; ອີງໃສ່ແຫຼ່ງຂ່າວຕ່າງປະເທດ, ຜູ້ຂຽນໄດ້ຕິດຕາມສະພາບການທີ່ເກີດຂຶ້ນເປັນປະເດັນຮ້ອນແຮງຂອງໂລກ (ປະເທດມະຫາອຳນາດ) ທີ່ໄດ້ຜູ້ນຳໃໝ່ ກຳລັງງັດເກມເສດຖະກິດເພື່ອດຶງເງິນເຂົ້າປະເທດ ແລະ ເຂົ້າຖົງຕົນເອງ, ໄດ້ພະຍາຍາມກີດກັນການຄ້າ-ສິນຄ້າຂອງຄູ່ຄ້າດ້ວຍວິທີການຕ່າງໆ ເພື່ອກົດດັນ-ຕໍ່ລອງເອົາປຽບ ໃຫ້ໄດ້ຜົນປະໂຫຍດສູງສຸດເຂົ້າປະເທດຕົນ ເຖິງແມ່ນວ່າມັນບໍ່ຍຸຕິທຳ ແລະ ມີທາງສຽງຄັດຄ້ານກໍຕາມ.

ສົງຄາມເສດຖະກິດນັ້ນ ບໍ່ພຽງແຕ່ກ່ຽວຂ້ອງໂດຍກົງເລື່ອງຄ້າຂາຍ-ຂົນສົ່ງສິນຄ້າ ແຕ່ມັນຍັງກ່ຽວຂ້ອງເລິກແລບໃນທາງດ້ານການເມືອງ ແລະ ສົງຄາມ ເພາະຫຼາຍແຫຼ່ງຂ່າວກໍໄດ້ວິເຄາະໄວ້ວ່າ ການເຈລະຈາທີ່ລົ້ມເຫຼວຍ້ອນວ່າການສະເໜີຜົນປະໂຫຍດບໍ່ລົງໂຕ, ໝາຍຄວາມວ່າມີການເອົາປຽບເກີນໄປ ຜູ້ນ້ອຍກໍຍອມບໍ່ໄດ້ ວ່າຊັ້ນສານໍ!.

ການຫຼິ້ນເກມງັດເອົາກຳແພງພາສີ ຫຼື ຕໍ່ລອງປ່ຽນແປງລະບຽບການຄ້າຂາຍ ລວມເຖິງສັ່ງຍົກເລີກສິນຄ້າຕ່າງໆຫຼາຍແນວກໍໄດ້ປາກົດມີບາງປະເທດງັດກ້າມຄືນ ຈົນວ່າໄດ້ເສຍໜ້າໂຍະຍານ ຫຼືບລ່ຽມ! ສະເໜີແລກປ່ຽນ.




# ວິທີເຮັດວຽກ

**ພາກທີ 7**
**ບັນຫາພະນັກງານ**

ໃນໂລກນີ້, ອັນໃດກໍໝູນວຽນປ່ຽນແປງ, ຄວາມນຶກຄິດຂອງຄົນກໍໝູນວຽນປ່ຽນແປງ, ເພາະສະນັ້ນ ການເບິ່ງພະນັກງານກໍບໍ່ຄວນຕາຍຕົວເພາະມັນກໍຕ້ອງປ່ຽນແປງຄືກັນ, ຍົກຕົວຢ່າງກໍຄື: ບາງຄົນເມື່ອກ່ອນນີ້ເຂົ້າຮ່ວມເຮັດການປະຕິວັດ, ມາດຽວນີ້ຊໍ້າພັດກັບມາຕ້ານການປະຕິວັດ, ບາງຄົນເມື່ອກ່ອນນີ້ບໍ່ເຮັດການປະຕິວັດເວລານີ້ຊໍ້າພັດເຂົ້າຮ່ວມການປະຕິວັດ, ຮອດວ່າຜູ້ທີ່ພວມຮ່ວມມືໃນການປະຕິວັດຢູ່ດຽວນີ້ຕໍ່ໄປພາຍໜ້າກໍອາດຈະຕ້ານການປະຕິວັດກໍເປັນໄດ້.

ພະນັກງານຜູ້ໜຶ່ງເມື່ອກ່ອນນີ້ ມີຂໍ້ຜິດພາດກໍບໍ່ແມ່ນວ່າຍ້ອນແນວນັ້ນເຂົາເຈົ້າຈະຜິດພາດຢູ່ເລື້ອຍໆ, ກໍເຊັ່ນດຽວກັນກັບພະນັກງານຜູ້ຊຶ່ງດຽວນີ້ຍັງບໍ່ທັນມີຂໍ້ຜິດພາດກໍບໍ່ຮັບຮອງໄດ້ວ່າພາຍໜ້າທີ່ຈະບໍ່ມີຂໍ້ຜິດພາດຈັກເທື່ອ, ອະດີດປັດຈຸບັນ ແລະ ອະນາຄົດຂອງຄົນທຸກຄົນບໍ່ຫ່ອນເປັນຄືດຽວກັນຈັກເທື່ອ, ການເບິ່ງພະນັກງານບໍ່ແມ່ນວ່າຈະເບິ່ງແຕ່ໜ້າ, ເບິ່ງແຕ່ທາງນອກເທົ່ານັ້ນ; ຕ້ອງເບິ່ງລັກສະນະທາງໃນຂອງເຂົາເຈົ້າ, ບໍ່ແມ່ນເບິ່ງແຕ່ວຽກຊະນິດດຽວ, ແຕ່ໃນເວລາດຽວຕ້ອງເບິ່ງໝົດທາງຂະບວນການປະຫວັດຂອງຊີວິດ ແລະ ທັງໝົດຂະບວນການຂອງເຂົາເຈົ້າທີ່ໄດ້ເຮັດມາ. ບາງຄົນເມື່ອເຫັນຂະບວນການປະຕິວັດກ້າວຂຶ້ນສູ່ກະແສສູງ ກໍມາຂໍເຂົ້າພັກ ແລະ ເຮັດວຽກຢ່າງຂະຫຍັນຫ້າວຫັນ, ເພາະຫວັງວ່າຈະໄດ້ໄຊຊະນະຍ້ອນ, ເມື່ອໃດຂະບວນການປະຕິວັດພົບພໍ້ຂໍ້ຫຍຸ້ງຍາກກໍເລີຍກະວົນກະວາຍ, ບໍ່ເຊື່ອວ່າຈະຊະນະອີກ; ເມື່ອພົບອັນຕະລາຍກໍຊໍ້າແຮ່ງຕ້ານການປະຕິວັດຍອມໄປເປັນສອດແນມໃຫ້ສັດຕູ, ເມື່ອເປັນສອດແນມໃຫ້ສັດຕູແລ້ວ, ຢາກເຮັດວຽກໄດ້ກໍຊໍ້າມາຕັ້ງຕີເຮັດຫ້າວຫັນຕໍ່ພັກເຮົາກວ່າຜູ້ອື່ນອີກ. ຖ້າເຮົາບໍ່ເບິ່ງໃຫ້ຄັກແນ່ກໍອາດຈະເຂົ້າໃຈຜິດວ່າມັນເປັນພະນັກງານຜູ້ດີກໍເປັນໄດ້.

ອ່ານຕໍ່ສະບັບໜ້າ...

## ສຳມະນາ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 24-26 ມີນານີ້ ທີ່ເມືອງວັງວຽງ ແຂວງວຽງຈັນ ໄດ້ມີກອງປະຊຸມສຳມະນາກ່ຽວກັບນະໂຍບາຍ ແລະ ການລົງທຶນເຂົ້າໃນວຽກງານປົກປ້ອງສັງຄົມ ໂດຍການເປັນປະທານກ່າວເປີດຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ (ສພຊ); ມີທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ທ່ານ ບຸນຕາ ເທບພະວົງປະທານກຳມາທິການວັດທະນະທຳ-ສັງຄົມ, ທ່ານ ບັກໂຣເດັຍ ເບີຄະນ໋ອບ ຜູ້ປະສານງານອົງການສະຫະປະຊາຊາດປະຈຳ ສປປລາວ, ບັນດາທ່ານປະທານກຳມາທິການແລະເລຂາທິການສະພາແຫ່ງຊາດ, ລັດຖະມົນຕີ-ຮອງລັດຖະມົນຕີກະຊວງ-ອົງການທີ່ກ່ຽວຂ້ອງ, ຮອງປະທານກຳມາທິການ, ປະທານສະພາປະຊາຊົນຂັ້ນແຂວງ, ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ສພຊ ພ້ອມດ້ວຍບັນດາທ່ານຊ່ຽວຊານ, ຕາງໜ້າອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ແລະ ຖືກເຊີນ ເຂົ້າຮ່ວມຫຼາຍກວ່າ 90 ທ່ານ.

ຈຸດປະສົງແມ່ນເພື່ອຍົກສູງຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບແນວຄວາມຄິດ ແລະ ຄວາມສຳຄັນຂອງລະບົບປົກປ້ອງສັງຄົມ; ການກຳນົດນະໂຍບາຍ ແລະ ການລົງທຶນເຂົ້າໃນວຽກງານປົກປ້ອງສັງຄົມ; ບົດຮຽນຂອງສາກົນກ່ຽວກັບລະບົບການປະກັນສັງຄົມ, ການປະກັນສຸຂະພາບ, ສິ່ງທ້າທາຍ ແລະ ອຸປະສັກໃນການເຂົ້າເຖິງລະບົບປະກັນສຸຂະພາບ ແລະ ປະກັນສັງຄົມຂອງແຮງງານນອກລະບົບໃນຂັ້ນຮາກຖານ; ບົດບາດຂອງລັດຖະສະພາສາກົນ ຕໍ່ວຽກງານປົກປ້ອງສັງຄົມ, ບົດບາດຂອງສະມາຊິກລັດຖະສະພາ ແລະ ລັດຖະສະພາໃນການຕິດຕາມກວດກາ ວຽກງານປົກປ້ອງສັງຄົມ ແລະ ບົດບາດຂອງສະພາແຫ່ງຊາດ ຕໍ່ວຽກງານການປົກປ້ອງສັງຄົມ.



ທ່ານຄຳໃບ ດຳລັດກ່າວວ່າ: ກອງປະຊຸມສຳມະນາຄັ້ງນີ້ ເພື່ອເຜີຍແຜ່, ສ້າງຄວາມເຂົ້າໃຈຕໍ່ກັບນະໂຍບາຍ ແລະ ການລົງທຶນເຂົ້າໃນລະບົບປົກປ້ອງສັງຄົມ ພາຍໃຕ້ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດຮອດປີ 2025 ແລະ ຈະໄດ້ພ້ອມກັນປຶກສາຫາລື, ກຳນົດບຸລິມະສິດເບື້ອງຕົ້ນຕໍ່ການສ້າງຍຸດທະສາດປົກປ້ອງສັງຄົມແຫ່ງຊາດໃນໄລຍະຕໍ່ໜ້າ (ປີ 2026-2030); ພ້ອມກັນນີ້, ຈະໄດ້ຮັບຟັງການໃຫ້ບົດຮຽນທາງດ້ານທິດສະດີ ແລະ ພຶດຕິກຳຕົວຈິງ ຈາກຊ່ຽວຊານທັງພາຍໃນແລະຕ່າງປະເທດຕໍ່ກັບວຽກງານການປົກປ້ອງສັງຄົມ ເພື່ອໃຫ້ຜູ້ເຂົ້າຮ່ວມມີຄວາມຮັບຮູ້, ເຂົ້າໃຈ ແລະ ສາມາດກຳໄດ້ຢ່າງເລິກເຊິ່ງ ເພື່ອນຳໄປກຳນົດທິດທາງແຜນການ, ວິທີການ ແລະ ມາດຕະການຈັດຕັ້ງປະຕິບັດ, ພ້ອມທັງມີການຕິດຕາມກວດກາແລະຊຸກຍູ້ວຽກງານດັ່ງກ່າວທັງຢູ່ສູນກາງແລະທ້ອງຖິ່ນ ໃຫ້ມີຜົນສຳເລັດດີຂຶ້ນເພື່ອປະກອບສ່ວນຕໍ່ການບັນລຸແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X, ຮັບປະກັນໃຫ້ກອງທຶນປົກປ້ອງສັງຄົມ ມີຄວາມຍືນຍົງດ້ານງົບປະມານ, ປະຊາຊົນບັນດາເຜົ່າໄດ້ຮັບການປົກປ້ອງແບບທົ່ວເຖິງແລະເຂົ້າເຖິງຊຸດອຸດໜູນປົກປ້ອງສັງຄົມອັນຈຳເປັນພື້ນຖານ ຢ່າງມີປະສິດຕິພາບ.

ໃນກອງປະຊຸມ ໄດ້ຮັບຟັງສະພາບລວມຂອງລະບົບປົກປ້ອງສັງຄົມ ແລະ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ, ຜົນໄດ້ຮັບ ແລະ ສິ່ງທ້າທ້າຍ; ສະພາບການດ້ານເສດຖະກິດ, ສັງຄົມ ແລະ ການເມືອງ ຕໍ່ວຽກງານປົກປ້ອງສັງຄົມ; ລະບົບປະກັນສັງຄົມ: ຜົນໄດ້ຮັບ, ສິ່ງທ້າທາຍ ແລະ ທິດທາງໃນຕໍ່ໜ້າ; ລະບົບປະກັນສັງຄົມໃນສະພາບການດ້ານເສດຖະກິດ-ສັງຄົມປັດຈຸບັນ; ຜົນໄດ້ຮັບແລະຂໍ້ແນະນຳຈາກການຄຳນວນຄະນິດສາດປະກັນສັງຄົມ ແລະ ການປັບປຸງນິຕິກຳ, ມາດຕະຖານ ແລະ ການປະຕິບັດທີ່ດີຈາກສາກົນ; ບົດບາດຂອງລັດຖະສະພາກຳປູເຈຍ ຕໍ່ການຕັດສິນໃຈດ້ານນະໂຍບາຍປົກປ້ອງສັງຄົມ, ການທົບທວນງົບປະມານ ແລະ ຄວາມຮັບຜິດຊອບ; ລະບົບປະກັນສຸຂະພາບ: ຜົນໄດ້ຮັບ, ສິ່ງທ້າທາຍ ແລະ ທິດທາງໃນຕໍ່ໜ້າ; ສິ່ງທ້າທາຍແລະອຸປະສັກ ໃນການເຂົ້າເຖິງລະບົບປະກັນສຸຂະພາບ ແລະ ປະກັນສັງຄົມ ຂອງແຮງງານນອກລະບົບໃນຂັ້ນຮາກຖານ; ການສ້າງຄວາມເຂັ້ມແຂງໃຫ້ລະບົບປະກັນສຸຂະພາບ: ຜົນໄດ້ຮັບ ແລະ ຂໍ້ສະເໜີແນະນຳຈາກການຄຳນວນຄະນິດສາດກອງທຶນປະກັນສຸຂະພາບ, ການທົບທວນການຄຸ້ມຄອງບໍລິຫານ ແລະ ບົດຮຽນຈາກພາກພື້ນ; ໂຄງການອາຫານທ່ຽງ: ຜົນໄດ້ຮັບ, ສິ່ງທ້າທາຍ ແລະ ທິດທາງໃນຕໍ່ໜ້າ; ໂຄງການອຸດໜູນຜູ້ພິການ: ສຽງຈາກຜູ້ໄດ້ຮັບຜົນປະໂຫຍດ, ຜົນໄດ້ຮັບ ແລະ ທິດທາງໃນຕໍ່ໜ້າ; ລະບົບປົກປ້ອງສັງຄົມຂອງປະເທດຫວຽດນາມ: ສະພາບປັດຈຸບັນ, ສິ່ງທ້າທາຍ ແລະ ການປະຕິຮູບນະໂຍບາຍ; ສະພາບລວມຂອງນະໂຍບາຍປົກປ້ອງສັງຄົມ ແລະ ການລົງທຶນເຂົ້າໃນວຽກງານປົກປ້ອງສັງຄົມ: ບົດຮຽນຈາກລັດຖະສະພາສາກົນ; ບົດບາດຂອງສະພາແຫ່ງຊາດລາວ ຕໍ່ວຽກງານການປົກປ້ອງສັງຄົມ.

ບັນດາຜູ້ເຂົ້າຮ່ວມ ໄດ້ພ້ອມກັນເອົາໃຈໃສ່ຄົ້ນຄວ້າ, ສົນທະນາ ແລະ ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ແລະ ຊັກຖາມຕໍ່ບັນຫາຕ່າງໆທີ່ວິທະຍາກອນ ແລະ ຊ່ຽວຊານ ໄດ້ນຳສະເໜີເພື່ອໃຫ້ມີຄວາມເຂົ້າໃຈຢ່າງກວ້າງຂວາງ, ເລິກເຊິ່ງ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານແລະວິຊາການ ຈາກອົງການແຮງງານສາກົນ (International Labour Organization-ILO) ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ອາລິນ ສຸພົມມະປະດິດ)**

## ຮຽບຮຽງເນື້ອໃນ...

(ຕໍ່ຈາກໜ້າ 1)

ບັນດາເນື້ອໃນທີ່ນຳມາຄົ້ນຄວ້າໃນກອງປະຊຸມຄັ້ງນີ້ປະກອບມີ: ການສະເໜີໂຄງຮ່າງປະຫວັດສະພາແຫ່ງຊາດ, ເນື້ອໃນພາກທີ I ຂະບວນວິວັດການກຳເນີດຂອງສະພາປະຊາຊົນສູງສຸດ, ເນື້ອໃນພາກທີ II ການເຕີບໃຫຍ່ຂະຫຍາຍຕົວຂອງສະພາແຫ່ງຊາດໃນແຕ່ລະໄລຍະ(1975-2025), ພາກທີ III ສະຫຼຸບສັງລວມ, ແລະ ຮ່າງບົດລາຍງານຜົນຂອງການຮຽບຮຽງຂຽນເນື້ອໃນປະຫວັດສະພາແຫ່ງຊາດ ຕໍ່ຄະນະປະຈຳສະພາແຫ່ງຊາດ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ລະດົມແນວຄວາມຄິດແລະສຸມສະຕິປັນຍາປະກອບຄຳຄິດຄຳເຫັນ ເພື່ອເຮັດໃຫ້ການດຳເນີນການຄົ້ນຄວ້າແລະຮຽບຮຽງເນື້ອໃນຂອງປຶ້ມປະຫວັດ 50 ປີ ສະພາແຫ່ງຊາດ ມີເນື້ອໃນຄົບຖ້ວນສົມບູນເພື່ອໄປລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ແລະ ຈັດພິມເຜີຍແຜ່ໃຫ້ທັນຕາມກຳນົດເວລາ.

**(ກົງທະນຸຄຳ ພິພັດເສລີ)**



## ສຸກສະບາຍຫາຍໂຣຄາ

# ອາຫານທີ່ກໍ່ໃຫ້ເກີດອາການໄມເກຣນ

\# ຄັດໂດຍ: ດອກຫຍ້າ




ໄມເກຣນ ແມ່ນອາການເຈັບຫົວມຸບໆເປັນບາດທີ່ຂ້ອນຂ້າງຮຸນແຮງ ໂດຍເລີ່ມຈາກບໍລິເວນໃກ້ດວງຕາ (ບໍລິເວນຄິ້ວ) ຫຼືຂະໜັບຂ້າງໃດຂ້າງໜຶ່ງ ແລະ ມັກເກີດຂຶ້ນຊໍ້າໆ, ບາງຄັ້ງອາດຈະເປັນດົນເຖິງ 3 ມື້ ຈົນຜູ້ທີ່ເຈັບຮູ້ສຶກວ່າທໍລະມານ ແລະ ບໍ່ສາມາດເຮັດຫຍັງໄດ້ ເຊິ່ງເຮົາກໍຮູ້ດີຢູ່ແລ້ວວ່າບໍ່ສາມາດຮັກສາໃຫ້ຫາຍຂາດໄດ້ ວິທີທີ່ດີທີ່ສຸດ ຄື ການຄົ້ນຫາວ່າປັດໃຈໃດທີ່ກະຕຸ້ນເຮັດໃຫ້ເກີດອາການ ແລ້ວຫຼີກລ່ຽງເພື່ອບໍ່ໃຫ້ເກີດອາການດັ່ງກ່າວເຊິ່ງເຮົາຈະມານຳສະເໜີປັດໃຈທີ່ກໍ່ໃຫ້ເກີດອາການໄມເກຣນ ຄື:

ປັດໃຈພາຍນອກ: ອາຫານທີ່ກະຕຸ້ນໃຫ້ເກີດອາການໄມເກຣນມີ: ເຄື່ອງດື່ມປະເພດທີ່ມີທາດເຫຼົ້າ, ຄາເຟອີນ ຫຼື ຈຳພວກທີ່ມີການຖະໜອມອາຫານ, ການດອງອາຫານ ຫຼື ອົບຄັວນ ເຊັ່ນ: ເບຄອນ, ຮອດດ໋ອກ, ຊີ້ນໝັກ, ວາຍແດງ, ຕັບໄກ່, ຖົ່ວເປືອກແຂງ, ນໍ້າແອັບເປີ້ນ, ໝາກອະງຸ່ນ, ເບີຣີ້, ຊາ, ກາເຟ, ໝາກໄມ້ແຫ້ງ ແລະ ແປ້ງນົວ. ນອກຈາກນັ້ນແລ້ວ, ກໍຍັງມີຊັອກໂກແລັດ, ເນຍແຂງ, ອາຫານທອດ ແລະ ໝາກໄມ້ຈຳພວກລີດສົ້ມ (ແຕ່ໃນທີ່ນີ້ກໍບໍ່ໄດ້ໝາຍຄວາມວ່າຜູ້ທີ່ເປັນໄມເກຣນຫ້າມບໍລິໂພກອາຫານຈຳພວກນີ້ພຽງແຕ່ຫຼຸດຜ່ອນລົງເພື່ອບໍ່ໃຫ້ໄປກະຕຸ້ນຕໍ່ການເກີດອາການປວດໄມເກຣນ).

ປັດໃຈພາຍໃນຮ່າງກາຍ ຄື:

- ນໍ້າຕານໃນເລືອດຕໍ່າ: ເນື່ອງຈາກຫິວ ຫຼື ກິນອາຫານທີ່ມີຄາໂບໄຮເດດຂັດຂາວຫຼາຍເກີນໄປ.
- ຢູ່ໃນພາວະຂາດນໍ້າ.
- ຄວາມຕຶງຄຽດ ແລະ ຄວາມກະວົນກະວາຍ.
- ນອນຫຼັບ ຫຼື ພັກຜ່ອນບໍ່ພຽງພໍ.
- ຢູ່ໃນບ່ອນທີ່ມີແສງແຈ້ງ ຫຼື ໄດ້ຮັບແສງແຈ້ງຈົນເກີນໄປ.
- ຢູ່ໃນສະຖານທີ່ ຫຼື ຟັງສຽງດັງເກີນໄປ.
- ການປ່ຽນແປງສະພາບອາກາດ ຫຼື ລະດູການ ອາກາດແຫ້ງ ຫຼື ລົມຮ້ອນ.
- ການປ່ຽນແປງລະດັບຮໍໂມນ ອາດເນື່ອງມາຈາກການປ່ຽນແປງພາຍໃນຮ່າງກາຍ ຫຼື ການກິນຢາຄຸມ.



## ອາດກະວີລາວ

# ມອບແດ່ວັນທີ 5 ເມສາ

\# ທິດາ ອິງແກ້ວ

❊ 5 ເມສາແມ່ນມື້
ປກສ ເປັນນາມ
64 ປີວຽນເຂົ້າ
1961 ແມ່ນມື້
ກຳເນີດເກີດກອງກຳລັງ
ແກ່ນແຂງຄົມກ້າ
ປະຊາລາວຈຳຈື່
ກຳລັງກ້ອນກໍ່ມາ

❊ ເປັນກຳລັງແກ່ນກ້າ
ເບິ່ງແຍງຄວາມປອດໄພ
ແຕ່ເໜືອເຖິງໃຕ້
ປ້ອງກັນຄວາມສະຫງົບເຂດບ້ານ
ປະຊາເພິ່ງອາໄສ
ໄພ່ປະຊາຊາວເຊື້ອ
ພູມໃຈເມື່ອມີທ່ານ
ລາວພົ້ນຜ່ານໄພ

❊ ນັບແຕ່ເດີນຍ່າງຍ້າຍ
ທ່ານເປັນຄົນດູແລ
ຄອຍເຕືອນໄພລະວັງເຝົ້າ
ເປັນກຳລັງເພິ່ງໃຫ້
ຂັບເຄື່ອນຕາມຖະໜົນ
ເບິ່ງແຍງທຸກຝີກ້າວ
ຍາມເຮົານອນນັ່ງ
ປະຊາໄດ້ອຸ່ນຄຶງ

❊ ລືມວ່າເປັນຜູ່ກ້າ
ຍອມທຸກທົນສະຫຼະສຸກ
ຂານອາສາສະຫຼະເນື້ອ
ຂໍວິ່ງວອນເທບໄທ້
ຄົນຂອງພັກປະຊາຊົນ
ສ່ວນຕົວເພື່ອເມືອງບ້ານ
ເພື່ອປະຊາບໍ່ຢ້ານຢ່ອນ
ບັນດານໃຫ້ສິ່ງພອນ

❊ ການງານສຸຂະພາບພ້ອມ
ຕຳຫຼວດລາວໝົດທຸກຄົນ
ເງິນຄຳມາໂຮມລົ້ນ
ມີແຕ່ສຸກລາບລົ້ນ
ຈະເລີນເດັ່ນຍືນຍາວ
ເຂັ້ມແຂງແຮງກ້າ
ໄພຢ່າພານມານຢ່າແວ່
ຈະເລີນເລື້ອຍຕະຫຼອດໄປ ທ່ານເອີຍ!



## ພັກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

\# ສຽມທ້ຽນ

❊ **ຊົມເຊີຍ**ວັນສ້າງຕັ້ງ**ກຳລັງປ້ອງກັນຄວາມສະຫງົບ** ຄົບຮອບ **64 ປີ** ຂໍໃຫ້ມີຄວາມສຸກ ເຫຼົ່າຕຳຫຼວດຄົນກ້າ ໜ້າທີ່ການງານກໍ່ກ້າວ ດາວປະດັບເຕັມບ່າ ລາບຍົດສູງສ່ຳຟ້າ ເດີນໜ້າຢ່າຖົດຖອຍ ຂໍໃຫ້ເປັນນາຍຮ້ອຍ ນາຍພັນຊົ້ນລື່ນ ທັງເຄື່ອນເປັນນາຍພົນກຽດກ້ອງ ປະຊາຍ້ອງຊ່າລື **ທ່ານເອີຍ!**

❊ **ປີ** 2025 ກ້າວສູ່ເດືອນເມສາ **ສາມເດືອນຜ່ານ**ມາ ຊາວໂລກຕ້ອງຜະເຊີນກັບຫຼາຍເຫດການໃຫຍ່ ທີ່ທຳລາຍຫຼາຍຊີວິດມະນຸດຕະຫຼອດຮອດພືດໄມ້ ແລະ ສັດປ່ານາໆພັນ ຄຽງຄູ່ກັບເຫດການນັ້ນ ຍັງມີ**ວິກິດຝຸ່ນພີເອັມ 2.5** ແລະໃນມໍ່ໆມານີ້ ກໍ່ມີຊາວໃຫຍ່**ແຜ່ນດິນໄຫວ**ໃນເຂດອາຊີ ເຮັດໃຫ້ມີການສູນເສຍຢ່າງຫຼວງຫຼາຍ ຫວັງວ່າມອນເຫດຮ້າຍ ຈະພົ້ນຜ່ານໄວໆ ຂໍຢ່າຫວນກັບມາ ປ່ອນໂລກກວ້າງ ຂໍໃຫ້ປວງປະຊາເຊື້ອ ໂລກກວ້າງໃຫຍ່ ຜ່ານພົ້ນໄພປ່ອນອຸ້ນ ສຸກລົ້ນຢູ່ສະບາຍ **ແດ່ທ້ອນ!**

## ຊວນຍິ້ມ

\# ແອ່ນຕຸ້ງ

### ເລື່ອງ: ບໍ່ຮູ້ວາ

ຜົວເມຍຄູ່ໜຶ່ງ ນັ່ງກິນເຂົ້າແລງຢູ່ຮ້ານອາຫານແຫ່ງໜຶ່ງທີ່ມີບັນຍາກາດທີ່ດີ, ມີຄວາມເປັນສ່ວນຕົວ; ທັນໃດນັ້ນ ຜູ້ເປັນເມຍໄດ້ຊີ້ມືໄປທີ່ດ້ານຫຼັງ, ແລ້ວເວົ້າຂຶ້ນວ່າ:

"ອີກບໍ່ດົນ, ເຮົາສອງຄົນ ກໍ່ຄືຊິເປັນຄືສອງເຖົ້ານັ້ນແຫຼະເນາະ, ຜົວທ່ຽວໜັງຍານ ຜົວວ່າບໍ່"

ຜູ້ເປັນຜົວຫຼຽວໄປຕາມທິດທາງທີ່ເມຍຊີ້ມືໄປ ພ້ອມຖອນຫາຍໃຈ, ແລ້ວຕອບດ້ວຍຄວາມເມື່ອຍໃຈວ່າ:

"ເຈົ້າເປັນບ້າຫວາ! ອັນນັ້ນແມ່ນແວ່ນໄດ໋ ບໍ່ຮູ້ຫວາ"



## ຄະຕິເຕືອນໃຈ

\# ດອກຫຍ້າ

"ຖ້າບໍ່ຢາກໃຫ້ໃຜຮູ້ໃຜເຫັນ ຈົ່ງຢ່າເຮັດ"

ລັດຖະສະພາຕ່າງປະເທດ

# ສິລັງກາ ຈະຈັດການເລືອກຕັ້ງທ້ອງຖິ່ນໃນເດືອນພຶດສະພານີ້

(Xinhua) - ຄະນະກຳມະການການເລືອກຕັ້ງຂອງສີລັງກາ ປະກາດເມື່ອວັນພະຫັດທີ 20 ມີນາຜ່ານມາວ່າການເລືອກຕັ້ງທ້ອງຖິ່ນຈະຈັດຂຶ້ນໃນວັນທີ 6 ພຶດສະພານີ້; ການປະກາດດັ່ງກ່າວ ມີຂຶ້ນຫຼັງຈາກຄະນະກຳມະການ ໄດ້ສຳເລັດຂະບວນການສະເໜີຊື່ຜູ້ລົງສະໝັກຮັບເລືອກຕັ້ງໃນວັນດຽວກັນ.

ຄະນະກຳມະການການເລືອກຕັ້ງກ່າວວ່າ, ການເລືອກຕັ້ງຈະເກີດຂຶ້ນສຳລັບອົງການປົກຄອງທ້ອງຖິ່ນ 336 ແຫ່ງ ໂດຍຜູ້ມີສິດເລືອກຕັ້ງ 17,296,330 ຄົນ ຈະໃຊ້ສິດລົງຄະແນນສຽງຂອງຕົນ.

ໃນເບື້ອງຕົ້ນ,ການເລືອກຕັ້ງມີກຳນົດຈະຈັດຂຶ້ນໃນປີ2023 ແຕ່ຖືກເລື່ອນອອກໄປໂດຍລັດຖະບານ ໂດຍອ້າງເຖິງຄວາມຫຍຸ້ງຍາກທາງດ້ານການເງິນຂອງປະເທດ.

ໃນເດືອນສິງຫາ 2024, ສານສູງສຸດໄດ້ສັ່ງໃຫ້ຄະນະກຳມະການການເລືອກຕັ້ງ ຈັດການເລືອກຕັ້ງທ້ອງຖິ່ນໃຫ້ໄວເທົ່າທີ່ຈະໄວໄດ້.



# Bundestag ອະນຸມັດການປັບປຸງລັດຖະທຳມະນູນເພື່ອຜ່ອນຜັນ "ການຜ່ອນໜີ້ສິນ"



© Bernd von Jutrczenka/dpa

(Xinhua)-ວັນອັງຄານທີ 18 ມີນາຜ່ານມາ, ບຸນເດສທາກເຊິ່ງເປັນສະພາຕ່ຳຂອງລັດຖະສະພາເຢຍລະມັນໄດ້ອະນຸມັດການປັບປຸງລັດຖະທຳມະນູນຄັ້ງສຳຄັນ ເພື່ອຜ່ອນຜັນນະໂຍບາຍ "ຜ່ອນໜີ້ສິນ" (debt brake) ທີ່ເຄັ່ງຄັດຂອງປະເທດ ໂດຍຈະເປີດທາງໄປສູ່ການໃຊ້ຈ່າຍເພີ່ມຂຶ້ນໃນດ້ານປ້ອງກັນປະເທດ, ພື້ນຖານໂຄງລ່າງ ແລະ ຄວາມເປັນກາງທາງດິນຟ້າອາກາດ; ການປັບປຸງລັດຖະທຳມະນູນຄັ້ງນີ້ໄດ້ຖືກສະເໜີໂດຍພັກສັງຄົມປະຊາທິປະໄຕ (SPD) ແລະ ພັນທະມິດ CDU/CSU ໃນລະຫວ່າງການເຈລະຈາເພື່ອຈັດຕັ້ງລັດຖະບານຊຸດໃໝ່ຫຼັງຈາກການເລືອກຕັ້ງລະດັບຊາດເມື່ອທ້າຍເດືອນກຸມພາຜ່ານມາ.

ການປັບປຸງລັດຖະທຳມະນູນດັ່ງກ່າວ ອະນຸຍາດໃຫ້ລາຍຈ່າຍດ້ານປ້ອງກັນປະເທດ ແລະ ກ່ຽວຂ້ອງກັບຄວາມໝັ້ນຄົງ ທີ່ເກີນ 1% ຂອງ GDP ຈະຖືກຍົກເວັ້ນຈາກການຄິດໄລ່ໃນການຜ່ອນໜີ້ສິນ; ນອກຈາກນີ້, ຍັງສ້າງກອງທຶນພິເສດມູນຄ່າ500 ຕື້ເອີໂຣ (ປະມານ 547 ຕື້ໂດລາສະຫະລັດ) ອຸທິດໃຫ້ກັບພື້ນຖານໂຄງລ່າງ ແລະ ຄວາມເປັນກາງທາງດິນຟ້າອາກາດ.

ມາດຕະການດັ່ງກ່າວຕ້ອງການຄະແນນສຽງສອງສ່ວນສາມໃນ Bundestag ເຊິ່ງເກນນີ້ຈະຜ່ານໄດ້ຢ່າງສະບາຍ ດ້ວຍການສະໜັບສະໜູນເພີ່ມຕື່ມຈາກພັກຂຽວ; ຂະນະນີ້ ຮ່າງລັດຖະທຳມະນູນໄດ້ເຂົ້າສູ່ສະພາສູງຂອງເຢຍລະມັນ(Bundesrat)ໂດຍຕ້ອງໄດ້ຮັບສຽງສະໜັບສະໜູນສອງສ່ວນສາມ ຈຶ່ງຈະຜ່ານເຊັ່ນດຽວກັນ.

# ປະທານາທິບໍດີທີ່ຈະອອກຈາກຕຳແໜ່ງຂອງ Namibia ຮຽກຮ້ອງສະມາຊິກສະພາຮັກສາຄວາມສາມັກຄີແຫ່ງຊາດ



(Xinhua) - ວັນອັງຄານທີ 18 ມີນາຜ່ານມາ, ນັງໂກໂລ ເອັມບຸມບາ (Nangolo Mbumba)ປະທານາທິບໍດີແຫ່ງສາທາລະນະລັດນາມິບີທີ່ກຳລັງຈະອອກຈາກຕຳແໜ່ງ ໄດ້ຮຽກຮ້ອງໃຫ້ບັນດາສະມາຊິກສະພານິຕິບັນຍັດໃນອະນາຄົດ ຍຶດໝັ້ນໃນລະບອບປະຊາທິປະໄຕ, ສາມັກຄີແຫ່ງຊາດ ແລະ ເສລີພາບທາງດ້ານເສດຖະກິດ ໃນຂະນະດຽວກັນກໍຕໍ່ສູ້ກັບການສໍ້ລາດບັງຫຼວງ, ການແບ່ງແຍກເຊື້ອຊາດ ແລະ ຄວາມແຕກແຍກ.

ໃນຄຳກ່າວອຳລາຕໍ່ສະພາແຫ່ງຊາດ (ສະພາຕ່ຳ), ເອັມບຸມບາ ໄດ້ສະທ້ອນໃຫ້ເຫັນເຖິງວາລະການດຳລົງຕຳແໜ່ງຂອງຕົນທີ່ກຳລັງຈະສິ້ນສຸດລົງ, ໃນຂະນະທີ່ປະເທດກຳລັງກະກຽມການຖ່າຍໂອນອຳນາດ "ອາທິດນີ້ ຖືເປັນການສິ້ນສຸດບົດບາດຢ່າງເປັນທາງການຂອງຂ້າພະເຈົ້າໃນວຽກງານສາທາລະນະ; ຂ້າພະເຈົ້າຊຸກຍູ້ໃຫ້ສະມາຊິກລັດຖະສະພາໃນປັດຈຸບັນ ແລະ ອະນາຄົດສືບຕໍ່ນຳໃຊ້ສະພານີ້ເພື່ອກ້າວໄປເຖິງຄວາມສາມັກຄີ, ເສລີພາບ, ຄວາມສະເໝີພາບ ແລະ ຄວາມຍຸຕິທຳ."

ຄຳກ່າວປາໄສຂອງເຂົາມີຂຶ້ນໃນຂະນະທີ່ນາມິບີກຳລັງກະກຽມສຳລັບພິທີສາບານຕົນເຂົ້າຮັບຕຳແໜ່ງຂອງປະທານາທິບໍດີຜູ້ໃໝ່ ເນຕຸມໂບ ນັນດີ-ເອັນໄດຕວາ (Netumbo Nandi-Ndaitwah) ໃນວັນສຸກທີ 21 ມີນາ ເຊິ່ງນາງຈະດຳລົງຕຳແໜ່ງເປັນປະມຸກລັດຍິງຄົນທຳອິດຂອງປະເທດ; ນອກຈາກນີ້, ລັດຖະບານຊຸດໃໝ່ ຈະເປັນຜູ້ຄວບຄຸມດູແລການເລີ່ມຕົ້ນຂອງສະພາແຫ່ງຊາດຊຸດທີ VIII ອີກດ້ວຍ.

ເອັມບຸມບາ ໄດ້ພັນລະນາເຖິງ 13 ເດືອນທີ່ຜ່ານມາວ່າເປັນໜຶ່ງໃນໄລຍະເວລາຫຍຸ້ງຍາກທີ່ສຸດໃນປະຫວັດສາດຂອງນາມິບີຫຼັງຈາກການເສຍຊີວິດຂອງອະດີດປະທານາທິບໍດີຮາເກເກິງໂກບ (Hage Geingob) ໃນເດືອນກຸມພາ 2024 ແລະ ປະທານາທິບໍດີຜູ້ກໍ່ຕັ້ງປະເທດ ແຊມນູໂຈມາ (Sam Nujoma) ໃນເດືອນກຸມພາ 2025; ເຖິງວ່າຈະມີສິ່ງທ້າທາຍເຫຼົ່ານີ້,ເອັມບຸມບາ ກ່າວວ່າ ປະເທດຍັງມຸ່ງໝັ້ນເພື່ອສະຖຽນລະພາບ ແລະ ການປົກຄອງທີ່ດີ.

ເອັມບຸມບາ, ນັກການເມືອງອາວຸໂສທີ່ດຳລົງຕຳແໜ່ງຕ່າງໆ ໃນລັດຖະບານຕັ້ງແຕ່ປະເທດນາມິບີໄດ້ຮັບເອກະລາດໃນປີ 1990, ເຂົາໄດ້ຮັບການແຕ່ງຕັ້ງເປັນຮອງປະທານາທິບໍດີ ໃນປີ2018ແລະໄດ້ດຳລົງຕຳແໜ່ງປະທານາທິບໍດີ ໃນປີ2024 ຫຼັງຈາກການເສຍຊີວິດຂອງ ເກິງໂກບ.

ເຂົາສະແດງຄວາມເຊື່ອໝັ້ນຕໍ່ບັນດາສະຖາບັນປະຊາທິປະໄຕຂອງປະເທດ ແລະ ຮຽກຮ້ອງໃຫ້ບັນດານັກກົດໝາຍສຸມໃສ່ການພັດທະນາເສດຖະກິດ ແລະ ການປົກຄອງ.



## ສະຫຼຸບວຽກງານ ...

(ຕໍ່ຈາກໜ້າ 1)

ໜ້າຈາກຮາກຖານພັກອ້ອມຂ້າງອົງຄະນະພັກ, ຄະນະປ້ອງກັນພາຍໃນ ແລະ ໜ່ວຍປ້ອງກັນຕົວຂອງ ສພຊ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມຄັ້ງນີ້ ເພື່ອກວດກາ, ສະຫຼຸບຕີລາຄາຄືນດ້ານດີ, ດ້ານຄົງຄ້າງ ຂອງການຈັດຕັ້ງເຄື່ອນໄຫວວຽກງານປ້ອງກັນພາຍໃນ ແລະ ການປ້ອງກັນຕົວຂອງສະພາແຫ່ງຊາດໃນປີ2024 ເພື່ອເປັນພື້ນຖານໃຫ້ແກ່ການກຳນົດທິດທາງແຜນການວຽກງານຈຸດສຸມໃນປີ 2025 ເຊິ່ງເປັນວຽກງານທີ່ມີຄວາມໝາຍຄວາມສຳຄັນ, ເປັນວຽກງານຮັບປະກັນທາງດ້ານຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ປອດໄພ ຂອງສຳນັກງານ-ຫ້ອງການ ລວມທັງສະພາບທາງດ້ານແນວຄິດ, ການເຄື່ອນໄຫວຂອງສະມາຊິກພັກ, ພະນັກງານ-ລັດຖະກອນພາຍໃນ ສພຊ; ເພື່ອຄົ້ນຄວ້າ, ປະກອບຄຳຄິດຄຳເຫັນໃສ່ບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານປ້ອງກັນພາຍໃນ ແລະ ໜ່ວຍປ້ອງກັນຕົວ ໃນປີ 2024 ພ້ອມທັງກຳນົດທິດທາງແຜນການວຽກງານຈຸດສຸມໃນປີ 2025 ເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ ແລະມີປະສິດທິຜົນດີຂຶ້ນ. ນອກນັ້ນ, ຍັງໄດ້ຮັບຟັງການມີຄຳເຫັນແນະນຳກ່ຽວກັບວຽກງານວິຊາສະເພາະປ້ອງກັນພາຍໃນ ຈາກກະຊວງ ປກສ ເຊິ່ງຍົກໃຫ້ເຫັນເຖິງຄວາມສຳຄັນຈຳເປັນ, ຫຼັກການ, ລະບຽບການ ແລະ ແບບແຜນວິທີເຮັດວຽກໃນການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານປ້ອງກັນພາຍໃນແລະການປ້ອງກັນຕົວ ຢູ່ສຳນັກງານ-ອົງການ ໂດຍສະເພາະແມ່ນສະພາບການຢູ່ພາຍໃນການຈັດຕັ້ງຂອງ ສພຊ ເພື່ອເປັນແນວທາງໃຫ້ແກ່ການສືບຕໍ່ປະຕິບັດໜ້າທີ່ການເມືອງທີ່ພັກ-ລັດມອບໝາຍ ໃຫ້ດີຂຶ້ນເທື່ອລະກ້າວ.

ສະຫາຍ ພົທ. ສຸວອນ ເລືອງບຸນມີ ໄດ້ມີຄຳເຫັນວ່າ: ວຽກງານປ້ອງກັນພາຍໃນ ແລະ ການປ້ອງກັນຕົວ ແມ່ນວຽກງານໜຶ່ງທີ່ມີຄວາມສຳຄັນ ເຊິ່ງເປັນເຄື່ອງມືອັນໜັກແໜ້ນຂອງພັກໃນການປ້ອງກັນແນວທາງ,ແຜນນະໂຍບາຍ,ກົດລະບຽບຂອງພັກ, ປ້ອງກັນຫຼັກການຈັດຕັ້ງ ແລະ ຫຼັກການເຄື່ອນໄຫວຂອງພັກ, ປ້ອງກັນລັດຖະທຳມະນູນ ແລະ ກົດໝາຍຂອງລັດ, ປ້ອງກັນພະນັກງານ, ສະມາຊິກພັກທາງດ້ານການເມືອງ-ແນວຄິດ, ປ້ອງກັນຮັກສາຄວາມລັບຂອງພັກ, ຂອງຊາດ ແລະ ຕອບຕ້ານ "ສົງຄາມຫັນປ່ຽນໂດຍສັນຕິ" ຂອງອິດທິກຳລັງປໍລະປັກໃນຂົງເຂດແນວຄິດ, ວັດທະນະທຳ; ພ້ອມກັນນັ້ນ, ກໍເປັນວຽກງານທີ່ຮັບປະກັນທາງດ້ານຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ປອດໄພ ພາຍໃນສຳນັກງານ-ຫ້ອງການຂອງສະພາແຫ່ງຊາດ. ສະນັ້ນ, ຄະນະພັກແຕ່ລະຂັ້ນ ຕ້ອງໄດ້ສືບຕໍ່ປັບປຸງກົງຈັກການຈັດຕັ້ງຂອງຕົນ, ຍົກສູງຄຸນນະພາບຂອງພະນັກງານທີ່ເຮັດວຽກປ້ອງກັນພາຍໃນ ໃຫ້ເຂັ້ມແຂງສາມາດປະຕິບັດໜ້າທີ່ການເມືອງທີ່ພັກລັດ-ມອບໝາຍໃຫ້ໄດ້ເປັນຢ່າງດີ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ.....037...../ປປທ
ນະຄອນຫຼວງວຽງຈັນ, ວັນທີ...22 ມີນາ 2025.....

## ລັດຖະດຳລັດ

**ວ່າດ້ວຍການປະກາດໃຊ້ ລັດຖະທຳມະນູນ**
**ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2025)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງ ສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 04/ ສພຊ, ລົງວັນທີ 20 ມີນາ 2025 ກ່ຽວກັບການຮັບຮອງເອົາ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2025);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 12/ ຄປຈ, ລົງວັນທີ 21 ມີນາ 2025.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2025).
**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

---

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

ເລກທີ 04 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 20 / 03 / 25

**ມະຕິ**
**ກອງປະຊຸມສະພາແຫ່ງຊາດ**
**ກ່ຽວກັບການຮັບຮອງເອົາລັດຖະທຳມະນູນ**
**ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2025)**

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ເດືອນທັນວາ ປີ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ເດືອນມິຖຸນາ ປີ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝວິສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນການປັບປຸງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2025 ໃນວາລະຂອງກອງປະຊຸມ ຄັ້ງວັນທີ 17 ເດືອນມີນາ ປີ 2025 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 20 ເດືອນມີນາ ປີ 2025.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2025) ດ້ວຍຄະແນນສຽງຫຼາຍກວ່າ ສອງສ່ວນສາມ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

---

## ປະກາດໃຊ້...

(ຕໍ່ຈາກໜ້າ 1)

ສະໄໝວິສາມັນເທື່ອທີ 2 ຂອງ ສະພາແຫ່ງຊາດ (ສພຊ) ຊຸດທີ IX ພິຈາລະນາຮັບຮອງ; ຜ່ານການພິຈາລະນາຢ່າງຖີ່ຖ້ວນ, ເລິກເຊິ່ງ ໃນຕອນບ່າຍວັນທີ 20 ມີນາ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ທີ່ມີໜ້າເຂົ້າຮ່ວມກອງປະຊຸມ ຈຳນວນ 156 ທ່ານ ໄດ້ໃຊ້ສິດປະຊາທິປະໄຕຂອງຕົນ ລົງຄະແນນສຽງຮັບຮອງເອົາລັດຖະທຳມະນູນສະບັບປັບປຸງປີ 2025 ຢ່າງເປັນເອກະສັນສູງ ໃນນີ້, ມີ 155 ທ່ານ ເຫັນດີ ເທົ່າກັບ 99.35% ຂອງຈຳນວນສສຊທັງໝົດທີ່ເຂົ້າຮ່ວມກອງປະຊຸມ, ບໍ່ເຫັນດີ 1 ທ່ານ ເທົ່າກັບ 0.64% ແລະ ບໍ່ອອກສຽງ 0%. ມາໃນວັນທີ 22 ມີນາ, ທ່ານ ທອງລຸນ ສີສຸລິດ ປະທານປະເທດ ໄດ້ອອກລັດຖະດຳລັດສະບັບເລກທີ037/ປປທ, ລົງວັນທີ 22 ມີນາ 2025 ປະກາດໃຊ້ລັດຖະທຳມະນູນສະບັບປີ 2025 ຢ່າງເປັນທາງການ.

ການພິຈາລະນາຮັບຮອງແລະປະກາດໃຊ້ລັດຖະທຳມະນູນສະບັບປີ 2025 ແມ່ນມີຄວາມໝາຍສຳຄັນເປັນຢ່າງຍິ່ງ ຍ້ອນວ່າການປັບປຸງລັດຖະທຳມະນູນຄັ້ງນີ້ ແມ່ນແນໃສ່ສືບຕໍ່ສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນລະບົບອຳນາດແຫ່ງລັດ ໃຫ້ມີປະສິດທິພາບສູງ, ສ້າງບາດລ້ຽວໃໝ່ໃຫ້ແກ່ການປົກປັກຮັກສາແລະສ້າງສາປະເທດຊາດ, ການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ, ຍູ້ແຮງການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ ທັງເປັນການປັບປຸງນິຕິກຳສູງສຸດຂອງລັດເຮົາທີ່ເປັນກົດໝາຍພື້ນຖານຂອງຊາດໃຫ້ສອດຄ່ອງກັບແນວທາງປ່ຽນແປງໃໝ່ຂອງພັກ ແລະ ການຄຸ້ມຄອງ-ບໍລິຫານລັດໃນໄລຍະໃໝ່.

ການປະກາດໃຊ້ລັດຖະທຳມະນູນໃນວັນທີ 22 ມີນານີ້ ຍິ່ງມີຄວາມໝາຍສຳຄັນທາງປະຫວັດສາດຂອງຊາດ ແລະ ຂອງພັກເຮົາ, ເພາະວ່າວັນທີ 22 ມີນາ 2025 ແມ່ນວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ທີ່ມີກຽດສະຫງ່າ ຄົບຮອບ 70 ປີ ແລະ ກໍເປັນໄລຍະເວລາທີ່ພັກປະຊາຊົນປະຕິວັດລາວ ກຳອຳນາດມາໄດ້ 50 ປີໃນປີນີ້ ທັງຢູ່ໃນໄລຍະເວລາທີ່ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນ ພວມສຸມໃສ່ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ເປັນປີສຸດທ້າຍ, ກະກຽມສະເຫຼີມສະຫຼອງ 3 ວັນປະຫວັດສາດອັນສຳຄັນຂອງຊາດຄື: ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 70 ປີ, ວັນສ້າງຕັ້ງລັດແຫ່ງ ສປປລາວ ຄົບຮອບ 50 ປີ ແລະ ວັນເກີດປະທານ ໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກຂອງປະຊາຊົນລາວບັນດາເຜົ່າ, ຜູ້ນຳກໍ່ຕັ້ງພັກ, ກໍ່ຕັ້ງແນວລາວສ້າງຊາດ, ກໍ່ຕັ້ງກຳລັງປະກອບອາວຸດປະຊາຊົນ, ກໍ່ຕັ້ງລັດແຫ່ງ ສປປ ລາວແລະລິເລີ່ມແນວທາງປ່ຽນແປງໃໝ່ຮອບດ້ານມີຫຼັກການຂອງພັກ ຄົບຮອບ 105 ປີ.

ເນື້ອໃນລັດຖະທຳມະນູນສະບັບປີ 2025 ນີ້ ລວມມີ: ຄຳນຳ ແລະ 14 ໝວດ, 122 ມາດຕາ, ທຽບໃສ່ລັດຖະທຳມະນູນສະບັບປີ 2015 ແມ່ນມີຄຳນຳ ແລະ 14 ໝວດ, 119 ມາດຕາ ລື່ນພຽງແຕ່ 3 ມາດຕາ; ໝາຍຄວາມວ່າມີມາດຕາໃໝ່5ມາດຕາຄື: ມາດຕາ 11 ກຳນົດກ່ຽວກັບຄວາມໝາຍຄວາມສຳຄັນຂອງຜືນແຜ່ນດິນອັນຄົບຖ້ວນ ແລະ ອຳນາດອະທິປະໄຕຂອງຊາດ, ມາດຕາ 103, 104, 105 ແລະ 106 ເຊິ່ງເປັນມາດຕາໃໝ່ ກຳນົດກ່ຽວກັບການກວດກາລັດ. ນອກຈາກ5ມາດຕາໃໝ່ນີ້ແລ້ວ, ຍັງມີ 62 ມາດຕາ ໄດ້ມີການປັບປຸງ ແລະ ມາດຕາບໍ່ໄດ້ປັບປຸງ ມີ 55 ມາດຕາ; ໃນ62ມາດຕາທີ່ມີການປັບປຸງນັ້ນ ບັນຫາສຳຄັນແມ່ນໄດ້ປັບປຸງກ່ຽວກັບການປົກຄອງທ້ອງຖິ່ນ ເປັນຕົ້ນການແບ່ງຂັ້ນການປົກຄອງທ້ອງຖິ່ນເປັນ 3 ຂັ້ນຄື: ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ. ລັດຖະທຳມະນູນສະບັບປີ2015 ໄດ້ກຳນົດເອົາການປົກຄອງຂັ້ນບ້ານ ເປັນການປົກຄອງລຸ່ມສຸດ, ແຕ່ລັດຖະທຳມະນູນປີ 2025 ແມ່ນກຳນົດເອົາຂັ້ນຕາແສງ ເປັນຂັ້ນການປົກຄອງລຸ່ມສຸດ; ສຳລັບຂັ້ນບ້ານແມ່ນເປັນການຈັດຕັ້ງຊຸມຊົນ ຫຼື ການຈັດຕັ້ງຂອງປະຊາຊົນພາຍໃນບ້ານ ໂດຍມີການເລືອກຕັ້ງຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ, ພະນັກງານຂັ້ນຕາແສງ ຈະເປັນພະນັກງານລັດ ແລະ ຂັ້ນຕາແສງ ຈະເປັນຫົວໜ່ວຍງົບປະມານອີກຂັ້ນໜຶ່ງ. ພ້ອມກັນນີ້, ໄດ້ມີການປ່ຽນແປງຊື່ເອີ້ນຈາກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າເມືອງແລະນາຍບ້ານ ມາເປັນປະທານຄະນະກຳມະການປົກຄອງແຂວງ, ປະທານຄະນະກຳມະການປົກຄອງນະຄອນຫຼວງ, ປະທານຄະນະກຳມະການປົກຄອງເມືອງແລະປະທານຄະນະກຳມະການປົກຄອງຕາແສງ.

ນອກຈາກການພິຈາລະນາຮັບຮອງແລະປະກາດໃຊ້ລັດຖະທຳມະນູນແລ້ວ, ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ຍັງໄດ້ພິຈາລະນາຮັບຮອງເອົາກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງ ແລະ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບປັບປຸງ ເຊິ່ງລາຍລະອຽດຈະມີການແຈ້ງຂ່າວຕື່ມຕໍ່ໄປ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຕາງໜ້າຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍແລະຂອບໃຈຢ່າງເລິກເຊິ່ງ ຕໍ່ບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງທົ່ວປະເທດ, ຄະນະນຳ ແລະ ພະນັກງານ-ລັດຖະກອນທຸກກະຊວງ, ອົງການ, ທຸກແຂວງ-ນະຄອນຫຼວງວຽງຈັນ, ທຸກເມືອງ ກໍຄືຜູ້ປະກອບການທັງພາກລັດແລະເອກະຊົນ, ແລະປະຊາຊົນລາວບັນດາເຜົ່າ ທີ່ໄດ້ມີສ່ວນຮ່ວມໃນວຽກງານປັບປຸງລັດຖະທຳມະນູນ ໂດຍສະເພາະໄດ້ອຳນວຍຄວາມສະດວກ, ເຂົ້າຮ່ວມ ແລະປະກອບຄວາມເຫັນຕໍ່ການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ, ການທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ ລວມທັງຜ່ານສື່ມວນຊົນມານະໂອກາດນີ້ຢ່າງສຸດອົກສຸດໃຈ! ຂໍສະແດງຄວາມຂອບໃຈຕໍ່ສື່ມວນຊົນທຸກສີ່ ທີ່ໄດ້ເອົາໃຈໃສ່ອອກຂ່າວກ່ຽວກັບການເຄື່ອນໄຫວວຽກງານປັບປຸງລັດຖະທຳມະນູນ ໂດຍສະເພາະຖ່າຍທອດສົດພິທີກອງປະຊຸມສະໄໝວິສາມັນເທື່ອທີ 2 ໃນການສະເໜີ, ພິຈາລະນາແລະລົງຄະແນນສຽງຮັບຮອງເອົາລັດຖະທຳມະນູນ ໃຫ້ປະຊາຊົນລາວບັນດາເຜົ່າພາຍໃນ ແລະ ຕ່າງປະເທດ ໄດ້ຮັບຮູ້ຢ່າງທົ່ວເຖິງ ແລະ ທັນການ.

ໃນໂອກາດນີ້, ທ່ານຮອງປະທານ, ຜູ້ປະຈຳການແລະຫົວໜ້າກອງເລຂາ ຄລຊ ຍັງຮຽກຮ້ອງມາຍັງພະນັກງານ, ສະມາຊິກພັກ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ນັກທຸລະກິດ, ຊັ້ນຄົນ ແລະ ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ຈົ່ງພ້ອມກັນຍົກສູງສະຕິເຄົາລົບ ແລະປະຕິບັດລັດຖະທຳມະນູນແລະກົດໝາຍ ໃຫ້ເຂັ້ມງວດກວ່າເກົ່າ, ພ້ອມກັນປະກອບສ່ວນປົກປັກຮັກສາແລະສ້າງສາປະເທດຊາດ, ປະຕິບັດສິດ ແລະ ພັນທະຂອງຕົນໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ, ຍົກສູງນ້ຳໃຈຮັກຊາດ, ນ້ຳໃຈເປັນເຈົ້າຂອງປະເທດຊາດ, ສູ້ຊົນຜ່ານຜ່າອຸປະສັກຕ່າງໆ ຮ່ວມແຮງຮ່ວມໃຈກັນສ້າງສາ ແລະ ພັດທະນາປະເທດຊາດ ຕາມທິດສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ເຮັດໃຫ້ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມສາມັກຄີປອງດອງ, ມີປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ເບິ່ງໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ກົດໝາຍປົກປ້ອງແມ່ຍິງ ທີ່ເບິ່ງກັນຄົນລະມຸມ

ໃນທ້າຍປີ 2021 ກອງກຳລັງຕໍ່ສູ້ຂອງອັບການິດສະຖານ ສາມາດຄອງໄຊຊະນະໄດ້ຢ່າງເດັດຂາດໃນທົ່ວປະເທດ ຄືສາມາດຊຸທັ່ງກຳລັງຮຸກຮານຕ່າງຊາດ ນຳໂດຍສະຫະລັດອາເມລິກາອອກຈາກຜືນແຜ່ນດິນຈົນກ້ຽງເອີດເຕີດ; ຈາກນັ້ນ, ລັດຖະບານໃໝ່ຂອງປະເທດນີ້ ກໍໄດ້ຮັບການສ້າງຕັ້ງຂຶ້ນໄປພ້ອມໆກັບໄດ້ອອກກົດໝາຍຫຼາຍສະບັບ ເພື່ອຄຸ້ມຄອງລັດຄຸ້ມຄອງສັງຄົມ. ໜຶ່ງໃນບັນດາກົດໝາຍເຫຼົ່ານັ້ນ ກໍມີກົດໝາຍເພື່ອຄຸ້ມຄອງ ແລະ ປົກປ້ອງຄວາມປອດໄພສຳລັບແມ່ຍິງ ເປັນກົດໝາຍສະບັບໃໝ່ອ່ຽມທີ່ບັນຈຸຂໍ້ຫ້າມເຊັ່ນ: ຫ້າມແມ່ຍິງເດີນທາງຄົນດຽວຕາມເສັ້ນທາງທີ່ມີຄວາມຍາວເກີນ 72 ກິໂລແມັດ, ຖ້າເດີນທາງເກີນກວ່າໄລຍະດັ່ງກ່າວ ກໍຕ້ອງມີເພດຊາຍຮ່ວມເດີນທາງນຳ ເພື່ອເຮັດໜ້າທີ່ປ້ອງກັນຄວາມປອດໄພ. ໂຄສົກກະຊວງສົ່ງເສີມສິລະທຳແລະປ້ອງກັນປາກົດການຫຍໍ້ທໍ້ ທີ່ເປັນເຈົ້າການຮ່າງກົດໝາຍສະບັບນີ້ ໄດ້ອະທິບາຍກ່ຽວກັບຂໍ້ຫ້າມນີ້ວ່າ "ເພື່ອປ້ອງກັນບໍ່ໃຫ້ແມ່ຍິງຕົກຢູ່ໃນຄວາມອັນຕະລາຍຈາກການຂົ່ມເຫັງ ແລະ ລວນລາມທາງເພດ". ຂໍ້ຫ້າມນີ້ໄດ້ຈູດສະນວນກະແສວິພາກວິຈານຈາກບາງປະເທດວ່າ ກົດໝາຍສະບັບນີ້ ລະເມີດ ແລະ ກົດໜ່ວງສິດເສລີພາບຂອງແມ່ຍິງ. ນອກຈາກນັ້ນ, ກົດໝາຍຍັງກຳນົດຫ້າມລົດໂດຍສານຮັບແມ່ຍິງທີ່ບໍ່ໃສ່ຜ້າຄຸມປົກໜ້າຂຶ້ນລົດເດັດຂາດ, ຫ້າມເປີດດົນຕີ ແລະ ມີສິ່ງມຶນເມົາໃນລົດ. ທາງການອັບການິສະຖານ ຢໍ້າແລ້ວຢໍ້າອີກວ່າ ກົດໝາຍສະບັບນີ້ເໝາະສົມກັບສັງຄົມຂອງປະເທດ ໂດຍບໍ່ສົນໃຈກັບສຽງວິພາກວິຈານຈາກບັນດາກຸ່ມທີ່ເອີ້ນຕົນເອງວ່າ ເປັນຜູ້ຕໍ່ສູ້ສຳລັບສິດທິມະນຸດສຳລັບແມ່ຍິງ.

ສ້າງກົດໝາຍເພື່ອອັດຊ່ອງວ່າງຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ

ໃນຕົ້ນເດືອນກັນຍາ 2023, ຄະນະນຳຂອງສະຫະພາບເອີຣົບ ຫຼື (EU) ໄດ້ລິເລີ່ມກະກຽມອອກກົດໝາຍສະບັບໃໝ່ ວ່າດ້ວຍສະເໝີພາບດ້ານບົດບາດຍິງ-ຊາຍໃນຕຳແໜ່ງຜູ້ຈັດການຂອງບໍລິສັດໃຫຍ່ໆ ຍ້ອນເຫັນວ່າຕຳແໜ່ງດັ່ງກ່າວສ່ວນໃຫຍ່ແມ່ນຢູ່ໃນກຳມືຂອງຜູ້ຊາຍ; ກົດໝາຍໄດ້ລົງເລິກ 3 ເນື້ອໃນໃຫຍ່ດັ່ງລຸ່ມນີ້:

1 ບໍລິສັດທີ່ມີພະນັກງານແຕ່ 250 ຂຶ້ນໄປ ຕ້ອງມີແມ່ຍິງ ແລະ ຕົວແທນຊົນເຜົ່າສ່ວນນ້ອຍໃນຕຳແໜ່ງການບໍລິຫານຈຳນວນ40% ຫຼື ຢ່າງໜ້ອຍບໍ່ໃຫ້ຫຼຸດ 30% ຂອງຈຳນວນກຳມະການບໍລິຫານທັງໝົດ;

2 ຂະບວນການຄັດເລືອກກຳມະການບໍລິຫານນັ້ນ ຕ້ອງໃຫ້ມີຄວາມໂປ່ງໃສ ໃນກໍລະນີຜູ້ຖືກຄັດເລືອກມີຄະແນນດີ, ຄຸນສົມບັດເທົ່າທຽມກັນນັ້ນ ໃຫ້ເລືອກເອົາແມ່ຍິງ ແລະ ຊົນເຜົ່າສ່ວນນ້ອຍ ເຂົ້າໃນຕຳແໜ່ງກຳມະການບໍລິຫານ;

3 ຕ້ອງເປີດເຜີຍລາຍຊື່ຂອງບັນດາບໍລິສັດທີ່ປະຕິບັດຕາມກົດໝາຍນີ້ຢ່າງຖືກຕ້ອງຄົບຖ້ວນໄປພ້ອມໆກັບເຜີຍແຜ່ລາຍຊື່ຂອງບັນດາບໍລິສັດ ທີ່ບໍ່ບັນລຸຕາມທີ່ກົດໝາຍໄດ້ກຳນົດອອກ; ບໍລິສັດທີ່ບໍ່ບັນລຸຕາມເປົ້າໝາຍຕ້ອງບອກສາເຫດ ແລະ ວິທີແກ້ໄຂໃນຕໍ່ໜ້າ, ຖ້າເຫດຜົນທີ່ອ້າງມານັ້ນ ບໍ່ແທດເໝາະກັບຄວາມເປັນຈິງ ບໍລິສັດເຫຼົ່ານັ້ນກໍຈະຖືກປັບໃໝ.

ຢູ່ ຍີ່ປຸ່ນ ປະເທດທີ່ມີເສດຖະກິດໃຫຍ່ເປັນອັນດັບທີ 3 ຂອງໂລກ ຮອງຈາກ ສ.ອາເມລິກາ ແລະ ສປຈີນ ກໍມີຂ່າວວ່າທາງການຂອງປະເທດນີ້ ໄດ້ປະຕິບັດນະໂຍບາຍຊຸກຍູ້ໃຫ້ນັກທຸລະກິດຍິງກ້າວຂຶ້ນສູ່ຕຳແໜ່ງຜູ້ຈັດການບໍລິສັດໃຫຍ່ໆ ເມື່ອປະມານ 9 ປີກ່ອນໜ້ານີ້, ໜັງສືພິມວຽງຈັນທາມ ສະບັບວັນທີ 26 ພະຈິກ 2016 ໄດ້ໃຫ້ຮູ້ວ່າ: ແມ່ຍິງຍີ່ປຸ່ນທີ່ຢູ່ໃນຕຳແໜ່ງຜູ້ຈັດການບໍລິສັດໃຫ່ຍໆນັ້ນ ມີພຽງ 3% ຂອງຈຳນວນບັນດາຜູ້ຈັດການທັງໝົດທີ່ມີໃນປະເທດ, ແຕ່ຖ້າໄປທຽບກັບແມ່ຍິງໃນເອີຣົບ ທີ່ມີຕຳແໜ່ງຜູ້ຈັດການ ກໍຈະໄດ້ຕົວເລກພຽງ 1/5 ເທົ່ານັ້ນ. ຍ້ອນແນວນີ້ເອງ, ທາງກະຊວງເສດຖະກິດ, ການຄ້າ ແລະ ອຸດສາຫະກຳຂອງຍີ່ປຸ່ນ ຈຶ່ງໄດ້ລິເລີ່ມສ້າງຕັ້ງສູນເຝິກອົບຮົມດ້ານການບໍລິຫານທຸລະກິດສຳລັບຜູ້ປະກອບການເພດຍິງທີ່ຕ້ອງການບືນຂຶ້ນສູ່ຕຳແໜ່ງຜູ້ນຳຂອງບໍລິສັດໃຫຍ່ໆ; ການເຝິກອົບຮົມຄັ້ງທຳອິດສຳລັບນັກທຸລະກິດຍິງຈຳນວນ 60 ຄົນນັ້ນ ຈັດຂຶ້ນໃນເດືອນມັງກອນ 2017 ເປັນເວລາ 6 ວັນ ໂດຍໄດ້ລົງເລິກວິຊາຍຸດທະສາດການຄຸ້ມຄອງແລະຄວາມຮູ້ກ່ຽວກັບວິທີແກ້ໄຂວິກິດການ. ຄືໄດ້ເວົ້າແລ້ວໃນເບື້ອງຕົ້ນວ່າ ນັກທຸລະກິດຍິງຍີ່ປຸ່ນທີ່ກຳຕຳແໜ່ງຜູ້ຈັດການບໍລິສັດໃຫຍ່ໆພາຍໃນປະເທດນັ້ນ ມີພຽງ 3% ແຕ່ໃນຕຳແໜ່ງອຳນວຍການບໍລິສັດຂະໜາດທົ່ວໆໄປນັ້ນ ມີຈຳນວນ 12.5% (ສະຖິຕິໃນປີ 2016).

ທະນາຄານພັດທະນາລາວ
LDB Bank




# ສິ່ງໃໝ່ໆ

*#ບ່າວກະບື*

**ນັກ**ທຸລະກິດທີ່ມີລູກນ້ອງຮັບໃຊ້ຫຼາຍຄົນພົບວ່າ ຜູ້ຊ່ວຍຄົນໜຶ່ງຂອງເຂົາມີນິດໄສມາການຊ້າ. ເຂົາເຕືອນຜູ້ຊາຍຄົນນັ້ນວ່າການປະພຶດແບບນີ້ຈະສ້າງບັນຫາໃຫ້ເຂົາເອງ, ເຂົາຕ້ອງປ່ຽນແປງພຶດຕິກຳດັ່ງກ່າວໃຫ້ໄດ້. ຝ່າຍລູກນ້ອງຕອບວ່າ ນັ້ນມັນບໍ່ແມ່ນຄວາມຜິດຂອງເຂົາ ແຕ່ເປັນຄວາມຜິດຂອງໂມງທີ່ບໍ່ຖືກເວລາ. ຫຼັງຈາກນັ້ນມາສອງ-ສາມວັນ ເຂົາກໍມາການຊ້າອີກ. ເຫັນແບບນັ້ນ, ນັກທຸລະກິດຈຶ່ງເວົ້າກັບເຂົາວ່າ:

"ມື້ອື່ນ ຄົນບໍ່ແມ່ນໂຕ, ກໍແມ່ນເຮົາຈະໄດ້ຮັບສິ່ງໃໝ່ໆ"

"ສິ່ງໃໝ່ໆນັ້ນ ທ່ານໝາຍເຖິງຫຍັງ?" ທ້າວຜູ້ຊ່ວຍຖາມຄືນ.

ນັກທຸລະກິດຕອບວ່າ: "ໂຕຈະມີໂມງໜ່ວຍໃໝ່ ຫຼືວ່າເຮົາຈະມີຜູ້ຊ່ວຍອຽກຄົນໃໝ່."

# Something New

***#BAOKBU***

A businessman who had several assistants found that one of them was in the habit of coming late to the office. He warned him that this conduct would lead him into trouble, and told him that he had better the fault was not his, but that of his watch, which did not keep good time. A few days afterwards he was late again, and for this the businessman said to him, " tomorrow either you or I will have something new."

"What is that sir?" asked the assistant.

The businessman replied, " Either you will have a new watch, or I shall have a new assistant."

ຕາມພາສາ ກາຕູນ




ເຊົ້າການ 9:00 ກັບ 3:00 ມາການບໍ່ກຸ້ມເງິນເດືອນ

● ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລີນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລີນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ